# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

07- 13 ເມສາ 2023

ປີທີ 12 ສະບັບທີ 917


## ກະກຽມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ



(ສພຊ) ເພື່ອປຶກສາຫາລື ການກະກຽມ ແລະ ການດຳເນີນຈັດຕັ້ງປະຕິບັດແຜນການຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ; ເພື່ອເປັນບ່ອນອີງໃຫ້ແກ່ຄະນະຮັບຜິດຊອບໃນການນຳພາ-ຊີ້ນຳ ການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມກົດໝາຍ 4 ສະບັບ ໃນຂົງເຂດສະພາ

ອ່ານຕໍ່ໜ້າ 4

## ຈາກໃຈ ບກ

ບກ ຂໍນົບນ້ອມ
ເປັນກະວີກອນໄຊ
ພັກ-ລັດການນຳພ້ອມ
ຊາວລາວທຸກຊາດເຊື້ອ

ຍໍຍື່ນພອນໄຊ
ສົ່ງໄປຍັງກ້ຳ
ປວງປະຊາທຸກເຜົ່າ
ສຸຂີລົ້ນຄູ່ຊູ່ຄົນ ທ່ານເອີຍ

ປີໃໝ່ ຂໍໃຫ້ລາບຍົດລົ້ນ
ທຸກສິ່ງປຸ່ນປອງໝາຍ
ອັນໃດດີໂຮມເຂົ້າ
ອາຍຸ ວັນນະ ສຸຂະ ພະລານາໄມພຽບພ້ອມ

ໂຊກໃຫຍ່ມະຫາໄຊ
ຫຼັ່ງໄຫຼໂຮມເຕົ້າ
ສົມຫວັງມະໂນນຶກ
ສົມແມ້ງດັ່ງໝາຍ ນັ້ນທ້ອນ!

## ເຜີຍແຜ່ນິຕິກຳກ່ຽວກັບການຕິດຕາມກວດກາກົດໝາຍຂົງເຂດຍຸຕິທຳ





(ສພຊ) ກອງປະຊຸມເຜີຍແຜ່ນິຕິກຳ ກ່ຽວກັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ ຈັດຂຶ້ນໃນວັນທີ 3 ເມສາ 2023 ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ເຂົ້າຮ່ວມປະຊຸມ (ດ້ວຍຮູບແບບປົກກະຕິ) ມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ, ມີຕາງໜ້າຈາກສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານ

ອ່ານໜ້າ 4

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມອົງການປະກັນສັງຄົມແຫ່ງຊາດ



(ສພຊ) ວັນທີ 24 ກຸມພາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຈາກສະພາແຫ່ງຊາດ ໄດ້ພົບປະຢ້ຽມຢາມພະນັກງານປະກັນສັງຄົມ ທີ່ສຳນັກງານໃຫຍ່ອົງການປະກັນສັງຄົມແຫ່ງຊາດ ບ້ານທົ່ງສ້າງນາງ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ໂດຍການຕ້ອນຮັບຂອງທ່ານນາງ ແກ້ວ ຈັນທະວີໄຊ ຫົວໜ້າອົງການປະກັນສັງຄົມແຫ່ງຊາດ, ມີຮອງຫົວໜ້າອົງການ, ຫົວໜ້າພະແນກ-ຮອງພະແນກ, ຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ.

ໃນໂອກາດນີ້, ທ່ານນາງ ແກ້ວ ຈັນທະວີໄຊ ຫົວໜ້າອົງການປະກັນສັງຄົມແຫ່ງຊາດ ໄດ້ລາຍງານສະພາບລວມກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການ ເຊິ່ງອົງການປະກັນສັງຄົມແຫ່ງຊາດ ມີຊື່ຫຍໍ້ວ່າ "ອປຊ" ເປັນການຈັດຕັ້ງທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີຖານະເທົ່າກົມ, ມີພາລະ

ອ່ານຕໍ່ໜ້າ 4

## ພົບປະສອງຝ່າຍລາວ-ໄທ

(ສພຊ) ວັນທີ 3 ເມສາຜ່ານມາ, ທີ່ສະພາແຫ່ງຊາດໄດ້ມີການພົບປະສອງຝ່າຍລາວ-ໄທ ເຊິ່ງຝ່າຍລາວ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ຝ່າຍໄທ ນຳໂດຍທ່ານ ວັນລົບ ຕັງຄະນານຸລັກ ປະ

ອ່ານຕໍ່ໜ້າ 3



## ສະມາຄົມມິດຕະພາບ ລາວ-ສ.ເກົາຫຼີ ມອບເຄື່ອງຊ່ວຍເຫຼືອໃຫ້ສະພາແຫ່ງຊາດ



(ສພຊ) ວັນທີ 5 ເມສາຜ່ານມາ, ທີ່ສະພາແຫ່ງຊາດໄດ້ມີການຈັດພິທີມອບ-ຮັບເຄື່ອງຊ່ວຍເຫລືອປະເພດຢາ ຫາປົວພະຍາດ ແລະ ຄຣີມ ລະຫວ່າງເລຂາທິການສະພາແຫ່ງຊາດ ແລະ ຫ້ອງການຄະນະພົວ

ອ່ານຕໍ່ໜ້າ 2



ສສຊ ແລະ ສູສຂ ຫຼວງນ້ຳທາ...

ອ່ານຕໍ່ໜ້າ 5



ພົບປະປະຊາຊົນ...

ອ່ານຕໍ່ໜ້າ 6



ປະຖະກະຖາ...

ອ່ານຕໍ່ໜ້າ 7

# ກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ແລະ ການນຳສະພາແຫ່ງຊາດ ຢ້ຽມຢາມຟາມກຸ້ງ ອີພີເອວ



(ສພຊ) ວັນທີ 31 ມີນາຜ່ານມາ, ກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ພ້ອມດ້ວຍການນຳຂອງສະພາແຫ່ງຊາດ ແລະ 3 ອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ ນຳໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ພ້ອມດ້ວຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມຟາມລ້ຽງກຸ້ງຂອງກຸ່ມບໍລິສັດ ອີພີເອວ ຈຳກັດຜູ້ດຽວ ທີ່ບ້ານໂຄກສະຫວ່າງ ເມືອງໄຊທານີນະຄອນຫຼວງວຽງຈັນ.

ໂອກາດດັ່ງກ່າວ, ທ່ານ ແອັດ ພົມວິໄລ ປະທານກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ ໄດ້ກ່າວຕ້ອນຮັບ ແລະ ລາຍງານໃຫ້ຮູ້ວ່າ: ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ ມີຫ້ອງການຕັ້ງຢູ່ບ້ານດອນໜູນເມືອງໄຊທານີ ນະຄອນຫຼວງວຽງຈັນ ເຊິ່ງບໍລິສັດແມ່ນດຳເນີນກິດຈະການໃນຫຼາຍດ້ານ ເຊັ່ນ: ດ້ານນ້ຳມັນ, ການຂົນສົ່ງ ແລະ ດ້ານກະສິກຳ.

ສຳລັບດ້ານກະສິກຳ ກຸ່ມບໍລິສັດ ອີພີແອວ ແມ່ນໄດ້ແນມເຫັນອາຫານທີ່ໄດ້ນຳເຂົ້າມາຈາກຕ່າງປະເທດເປັນສ່ວນຫຼາຍ ໂດຍສະເພາະແມ່ນກຸ້ງ ສະນັ້ນ, ຈຶ່ງໄດ້ຫາວິທີຄົ້ນຄິດ ແລະ ທົດລອງການລ້ຽງກຸ້ງແມ່ນ້ຳ ຫຼື ກຸ້ງກ້າມກາມ ໂດຍໄດ້ລ້ຽງທົດລອງມາແລ້ວ ເປັນເວລາ 3 ປີ ເຊິ່ງໃນແຕ່ລະປີແມ່ນເຫັນວ່າໄດ້ຜົນຕາມຄາດໝາຍທີ່ຕັ້ງໄວ້ ແລະ ປະສົບຜົນສຳເລັດໃນການທົດລອງລ້ຽງກຸ້ງ ເພື່ອປ້ອນຕະຫຼາດພາຍໃນເຫັນວ່າມີຜົນຕອບຮັບເປັນຢ່າງດີຈາກຜູ້ບໍລິໂພກ ແລະ ມີຄວາມຕ້ອງການຫຼາຍ. ດັ່ງນັ້ນ, ກຸ່ມບໍລິສັດ ອີພີແອວ ຈຶ່ງໄດ້ມີແຜນຂະຫຍາຍເພີ່ມຕື່ມອີກ ເພື່ອໃຫ້ພຽງພໍກັບຄວາມຕ້ອງການກັບລູກຄ້າ ແລະ ຜູ້ບໍລິໂພກ ທັງຍັງມີແຜນຂະຫຍາຍເພື່ອເປັນສິນຄ້າສົ່ງຂາຍພາຍໃນ ແລະ ສົ່ງອອກຕ່າງປະເທດ. ປັດຈຸບັນ ກຸ່ມບໍລິສັດ ອີພີແອວ ແມ່ນມີແຜນຂະຫຍາຍເນື້ອທີ່ການລ້ຽງກຸ້ງ ຈຳນວນ 100 ກວ່າເຮັກຕ້າ ເຊິ່ງປັດຈຸບັນແມ່ນກຳລັງບຸກເບີກເນື້ອທີ່ໃຫ້ສຳເລັດໃນໄວໆນີ້ ໂດຍທາງບໍລິສັດ ແມ່ນມີແບບແຜນການລ້ຽງທີ່ທັນສະໄໝ ແລະ ໃຫ້ທັນກັບຄວາມຕ້ອງການຂອງຕະຫຼາດ. ນອກຈາກແຜນການລ້ຽງກຸ້ງແລ້ວ ທາງກຸ່ມບໍລິສັດ ອີພີແອວ ຍັງມີແຜນປູກກ້ວຍຈຳນວນ 120 ຮຕ ເພື່ອເປັນສິນຄ້າສົ່ງອອກໄປສູ່ຕະຫຼາດຕ່າງປະເທດ ແລະ ຍັງມີແຜນປູກພືດອື່ນໆພາຍໃນປະເທດທີ່ຜູ້ບໍລິໂພກມີຄວາມຕ້ອງການ ເພື່ອທົດແທນຈາກການນຳເຂົ້າມາຈາກຕ່າງປະເທດ.

ໂດຍລວມແລ້ວ ກຸ່ມບໍລິສັດ ອີພີແອວ ແມ່ນມີຄວາມຕ້ອງການປູກຝັງ-ລ້ຽງສັດ ເພື່ອໃຫ້ເປັນສິນຄ້າຈຳໜ່າຍພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ ໂດຍແນວທາງວິໄສທັດຂອງກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ ມີທຸລະກິດຫຼາຍຢ່າງ ເພື່ອຊຸກຍູ້ສົ່ງເສີມໃຫ້ປະຊາຊົນມີວຽກເຮັດງານທຳ, ມີລາຍໄດ້ທີ່ໝັ້ນຄົງ, ສ່ວນດ້ານກະສິກຳ ແມ່ນເພື່ອຫຼຸດຜ່ອນການນຳເຂົ້າຂອງສິນຄ້າຈາກຕ່າງປະເທດ ແລະ ເພື່ອຫຼຸດຜ່ອນເງິນຕາທີ່ຈະອອກຕ່າງປະເທດ.

ໃນໂອກາດນີ້, ຄະນະໄດ້ຢ້ຽມຢາມເບິ່ງສະຖານທີ່ລ້ຽງກຸ້ງ, ສົນທະນາແລກປ່ຽນຄຳຄິດຄຳເຫັນ ເຈາະຈີ້ມບາງບັນຫາທີ່ຄະນະມີຄວາມສົນໃຈຢ່າງກົງໄປກົງມາ ໂດຍສະເພາະແມ່ນລະບົບການຈັດການບຳບັດນ້ຳ, ການເພາະລ້ຽງກຸ້ງ ໃນສະພາບອາກາດ ແລະ ນ້ຳໃນປະເທດລາວ, ແຜນການຂະຫຍາຍຟາມ ແລະ ອື່ນໆ.

ໂອກາດດຽວກັນນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ຕາງໜ້າໃຫ້ຄະນະ ຂຶ້ນກ່າວມີຄຳເຫັນ ແລະ ສະແດງຄວາມຊົມເຊີຍຕໍ່ກຸ່ມບໍລິສັດ ອີພີເອວ ຈຳກັດຜູ້ດຽວ ທີ່ມີວິໄສທັດທີ່ກວ້າງຂວາງ ແລະ ຫວັງວ່າກິດຈະການຂອງບໍລິສັດຈະມີຄວາມຄ່ອງໂຕ ແລະ ພັດທະນາໃຫ້ຈະເລີນກ້າວໜ້າຍິ່ງໆຕາມແນວທາງຂອງພັກ, ນະໂຍບາຍຂອງລັດ.

(ນາງ ປາກາລັກ ພົມມີໄຊ)



# ຄະນະຜູ້ແທນ ກຕທ ສຳເລັດການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ

(ສພຊ) ໃນລະຫວ່າງວັນທີ 28 ມີນາ 2023 ຫາ 1 ເມສາ 2023, ຄະນະຜູ້ແທນກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດລາວ ນຳໂດຍສະຫາຍ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ກຳມະການສະພາປະຊາຊົນແຂວງຮາຕິ້ງ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງທັງສອງຝ່າຍ. ກອງປະຊຸມໄດ້ຮັບຟັງການລາຍງານສະພາບການພັດທະນາເສດຖະກິດ-ສັງຄົມ ໂດຍຫຍໍ້ຂອງແຂວງໃນໄລຍະຕົ້ນປີ 2023 ກໍຄືການພົວພັນຮ່ວມມື ລະຫວ່າງແຂວງຮາຕິ້ງ ກັບບັນດາທ້ອງຖິ່ນຕ່າງໆຂອງລາວ ຈາກຫວຽດນາມ, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດໜ້າວຽກຕ່າງໆ ຈາກຄະນະຮັບຜິດຊອບທ່າເຮືອດັ່ງກ່າວ, ຜ່ານການໄປເບິ່ງຕົວຈິງເຫັນວ່າທ່າເຮືອສາກົນດັ່ງກ່າວມີສາງເກັບມ້ຽນສິນຄ້າ, ມີລະບົບການກໍ່ສ້າງເຂື່ອນກັ້ນຄື້ນນ້ຳ, ລະບົບເຕັກນິກທີ່ທັນສະໄໝໃນການບໍລິການຂົນສົ່ງສິນຄ້າ ທີ່ນັບມື້ໄດ້ຮັບການ



ແຂວງຮາຕິ້ງ ສສ.ຫວຽດນາມ, ໃນການຢ້ຽມຢາມຄັ້ງນີ້ ແມ່ນການປະຕິບັດຕາມບົດບັນທຶກການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ທີ່ລົງນາມຮ່ວມກັນໃນປີ 2022.

ໃນວັນທີ 30 ມີນາ 2023, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຮ່ວມກອງປະຊຸມພົບປະເຮັດວຽກຮ່ວມກັບສະຫາຍ ເລ ແອັງຕວັນ ຮອງປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດຫວຽດນາມ, ຄະນະຮອງປະທານຄະນະກຳມະການປະຊາຊົນແຂວງ; ພ້ອມນີ້, ກອງປະຊຸມຍັງໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບສະພາບການຈັດຕັ້ງປະຕິບັດສັນຍາ ແລະ ອະນຸສັນຍາ ທີ່ລັດຖະບານສອງປະເທດ ໄດ້ລົງນາມຮ່ວມກັນ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການຮ່ວມມື ແລະ ການລົງທຶນພັດທະນາທ່າທຽບເຮືອ ວຸ້ງອ້າງ 1,2,3.

ໃນໂອກາດດັ່ງກ່າວນີ້, ຄະນະ ຍັງໄດ້ເດີນທາງໄປຢ້ຽມຢາມ ທ່າເຮືອວຸ້ງອ້າງ ຂອງບໍລິສັດຮຸ້ນສ່ວນສາກົນລາວ-ພັດທະນາ, ມີການລົງທຶນ ແລະ ຂຸດຄົ້ນໄດ້ເປັນຢ່າງດີ, ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງລາວ ທັງເປັນການຮັດແໜ້ນສາຍພົວພັນມິດຕະພາບ ຄວາມສາມັກຄີພິເສດ ລະຫວ່າງສອງປະເທດ ລາວ-ຫວຽດນາມ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ແລະ ຄະນະຜູ້ແທນສະພາແຫ່ງຊາດຫວຽດນາມ ຍັງໄດ້ເຄື່ອນໄຫວຢ້ຽມຊົມສະຖານທີ່ທາງປະຫວັດສາດສາມແຍກດົ່ງຫຼົກຂອງແຂວງຮາຕິ້ງຕື່ມອີກ.



## ສະມາຄົມ...

(ຕໍ່ຈາກໜ້າ 1)

ພັນຕ່າງປະເທດສູນກາງພັກຂຶ້ນ ໂດຍການຕາງໜ້າກ່າວຮັບຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ແລະ ກ່າວມອບໂດຍ ທ່ານ ຄຳສວຍ ແກ້ວດາລາວົງ ປະທານສະມາຄົມມິດຕະພາບລາວ-ສ.ເກົາຫຼີ, ມີບັນດາທ່ານຄະນະຕາງໜ້າຈາກສອງພາກສ່ວນເຂົ້າຮ່ວມເປັນສັກຂີພິຍານ.

ເຄື່ອງຊ່ວຍເຫຼືອທີ່ນຳມອບໃນຄັ້ງນີ້ ປະກອບມີປະເພດຢາທາປົວພະຍາດ Nafri Cream 18 ແກັດ, Vanazole Cream 18 ແກັດ ແລະ Asiclover Cream 18 ແກັດ ລວມທັງໝົດ 54 ແກັດ ມູນຄ່າລວມ 240 ລ້ານກີບ ເຄື່ອງດັ່ງກ່າວ ແມ່ນໄດ້ຮັບການຊ່ວຍເຫຼືອຈາກສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອນຳເອົາໄປແຢກຢາຍໃຫ້ແກ່ພໍ່ແມ່ປະຊາຊົນ ແລະ ບັນດາສຸກສາລາເຂດຫ່າງໄກສອກຫຼີກ.

(ສອນສັກ ວັນວິໄຊ)

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

1) ຊີ້ນຳການປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຢູ່ແຕ່ລະທ້ອງຖິ່ນ ຕາມກົດໝາຍກຳນົດ ໃຫ້ນັບມື້ມີປະສິດທິຜົນດີຂຶ້ນ;

2) ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ເປັນຕົ້ນການສ້າງ ແລະ ປັບປຸງກົດໝາຍ, ການປະເມີນຜົນການປະຕິບັດກົດໝາຍ, ການໂຄສະນາເຜີຍແຜ່, ທາບທາມກົດໝາຍ, ຜົນສຳເລັດກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ; ການຕິດຕາມກວດກາ; ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນໆ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ່າງໆ ມີປະສິດທິພາບ, ປະສິດທິຜົນ;

3) ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາປະຊາ ຊົນຂັ້ນແຂວງ ຊຸດທີ II, ກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ກອງປະຊຸມແລກປ່ຽນບົດຮຽນລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມປິ່ນອ້ອມອື່ນໆ;

4) ຄະນະປະຈຳສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າປັບປຸງແບບແຜນວິທີເຮັດວຽກ ລະຫວ່າງກົງຈັກຂອງສະພາແຫ່ງຊາດກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງພ້ອມທັງສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ລາຍງານຄະນະປະຈຳສະພາແຫ່ງຊາດ ເພື່ອເປັນຂໍ້ມູນໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ;

5) ຊີ້ນຳການເກັບກຳຂໍ້ມູນສະພາບການເຄື່ອນໄຫວຂອງບັນດາກົງຈັກການຈັດຕັ້ງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ລາຍງານຄະນະປະຈຳສະພາແຫ່ງຊາດ; ເກັບກຳຜົນງານການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳປີ 2022 ແລະ 2023 ເພື່ອເປັນຂໍ້ມູນຄົ້ນຄວ້າການຍ້ອງຍໍ;

6) ຊີ້ນຳການສ້າງແຜນການພົບປະ, ແລກປ່ຽນບົດຮຽນຕ່າງໆ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ແນວລາວສ້າງຊາດແຂວງ/ນະຄອນຫຼວງ, ສະຫະພັນນັກຮົບເກົ່າແຂວງ ແລະ ອົງການຈັດຕັ້ງມະຫາຊົນຂັ້ນທ້ອງຖິ່ນ ເພື່ອປຶກສາຫາລືໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງແຕ່ລະພາກສ່ວນ.

6. ວຽກງານການເຄື່ອນໄຫວຕ່າງປະເທດ

ໃນປີ 2023 ສະພາແຫ່ງຊາດ ຈະໄດ້ເຄື່ອນໄຫວວຽກງານຕ່າງປະເທດ ດັ່ງນີ້:

1)ເຄື່ອນໄຫວຢ້ຽມຢາມສັນຖະວະໄມຕີຢ່າງເປັນທາງການ ຢູ່ບັນດາປະເທດອ້ອມຂ້າງຈຳນວນໜຶ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫຼື ດ້ວຍຮູບການຜ່ານລະບົບກອງປະຊຸມທາງໄກ;

2) ເຂົ້າຮ່ວມການເຄື່ອນໄຫວ ແລະ ປະຕິບັດພັນທະຂອງສະພາແຫ່ງຊາດລາວ ຕໍ່ບັນດາອົງການຈັດຕັ້ງລັດຖະສະພາພາກພື້ນ ແລະ ສາກົນ ທີ່ສະພາແຫ່ງຊາດລາວ ເປັນພາຄີ ເປັນຕົ້ນ ກອງປະຊຸມລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມລັດຖະສະພາສາກົນ (IPU), ກອງປະຊຸມການເປັນຄູ່ຮ່ວມລັດຖະສະພາອາຊີ-ເອີຣົບ (ASEP), ກອງປະຊຸມໃຫຍ່ສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF), ກອງປະຊຸມເວທີປຶກສາຫາລືເວທີລັດຖະສະພາອາຊີ-ປາຊີຟິກ (APPF);

3) ກະກຽມ ແລະ ເປັນເຈົ້າພາບຈັດກອງປະຊຸມສຸດຍອດສະພາແຫ່ງຊາດຂອງສາມປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ຄາດຄະເນຈະຈັດຂຶ້ນໃນວັນທີ 24-28 ເມສາ 2023 ຢູ່ ສປປ ລາວ;

4) ກະກຽມຕ້ອນຮັບຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ບັນດາປະເທດຈຳນວນໜຶ່ງທີ່ເຄື່ອນໄຫວຢ້ຽມຢາມ ສປປລາວ; ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທູຕານຸທູດປະຈຳຢູ່ ສປປລາວ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ແຂກຕ່າງປະເທດ;

5) ຄົ້ນຄວ້າໃຫ້ພະນັກງານວິຊາການໄປຖອດຖອນບົດຮຽນ ຢູ່ຕ່າງປະເທດ ເພື່ອກະກຽມການເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ໃນປີ 2024; ຈັດຝຶກອົບຮົມພາສາອັງກິດ ຕາມແຜນການສະໜອງທຶນຂອງບາງປະເທດ;

6) ສ້າງເງື່ອນໄຂໃຫ້ແກ່ຄະນະມິດຕະພາບລັດຖະສະພາຂອງສະພາແຫ່ງຊາດລາວ ເພື່ອເຄື່ອນໄຫວຢ້ຽມຢາມ ແລະ ພົບປະກັບບັນດາລັດຖະສະພາຕ່າງປະເທດ ອ້ອມຂ້າງຈຳນວນໜຶ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫຼື ດ້ວຍຮູບແບບຜ່ານລະບົບກອງປະຊຸມທາງໄກ;

7) ເພີ່ມທະວີການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ຄະນະປະຈຳສະພາແຫ່ງຊາດ ໄດ້ຕົກລົງໃຫ້ສັດຕະຍາບັນ.

7, ວຽກງານການເຄື່ອນໄຫວປິ່ນອ້ອມ

ສືບຕໍ່ຊີ້ນຳການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາການສ້າງພື້ນຖານໂຄງລ່າງຂອງສະພາປະຊາຊົນຂັ້ນແຂວງ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**IV. ມາດຕະການຈັດຕັ້ງປະຕິບັດ**

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ໄດ້ຮັບຜົນສຳເລັດ, ຄະນະປະຈຳສະພາແຫ່ງຊາດ ກຳນົດມາດຕະການ ດັ່ງນີ້:

1) ເປັນໃຈກາງກະກຽມສ້າງ ແລະ ປັບປຸງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX;

2) ຍົກສູງການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກການດຳເນີນໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມອື່ນໆ;

3) ເພີ່ມທະວີການສ້າງແຜນການຕິດຕາມກວດກາຢ່າງມີຈຸດສຸມ ໂດຍສະເພາະ ການກຳນົດຫົວຂໍ້, ຂັ້ນຕອນວິທີການຕິດຕາມກວດກາໃຫ້ມີຄວາມຊັດເຈນ, ຄົ້ນຄວ້າກຳແໜ້ນເນື້ອໃນຂອງກົດໝາຍ, ສົມທົບກັບພາກສ່ວນຕ່າງໆ, ສະຫຼຸບລາຍງານຜົນການຕິດຕາມກວດກາ ແລະ ສະເໜີມາດຕະການແກ້ໄຂບັນຫາດັ່ງກ່າວຕໍ່ຄະນະປະຈຳສະພາແຫ່ງຊາດມີທິດຊີ້ນຳໃຫ້ທັນເວລາ;

4) ເພີ່ມທະວີຄວາມເປັນເຈົ້າການຂອງສະມາຊິກສະພາແຫ່ງຊາດ ໃນການເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ; ເອົາໃຈໃສ່ການຕິດຕາມກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຖືສຳຄັນການເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍຂອງບັນດາອົງການລັດ, ການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ; ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງເພື່ອເຄື່ອນໄຫວຕາມສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໃນກົດໝາຍ;

5) ຄະນະປະຈຳສະພາແຫ່ງຊາດ, ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ເອົາໃຈໃສ່ຜັນຂະຫຍາຍແຜນ ການສະບັບນີ້ ອອກເປັນແຜນວຽກຈຸດສຸມອັນລະອຽດຂອງຕົນ ແລະ ເປັນເຈົ້າການປະສານສົມທົບກັບອົງການອື່ນໆຂອງລັດ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງສິ່ງອຳນວຍຄວາມສະດວກໃນການປະຕິບັດຕາມສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ທີ່ໄດ້ກຳນົດໃນກົດໝາຍ.

---

## ພົບປະ...

(ຕໍ່ຈາກໜ້າ 1)

ທານກຳມາທິການພັດທະນາສັງຄົມ ແລະ ກິດຈະການເດັກ, ເຍົາວະຊົນ, ສະຕີ, ຜູ້ສູງອາຍຸ, ຄົນພິການ ແລະ ຜູ້ດ້ອຍໂອກາດ ວຸດທິສະພາ ແຫ່ງລາຊະອານາຈັກໄທ ໂດຍມີຄະນະຜູ້ແທນທັງສອງຝ່າຍເຂົ້າຮ່ວມ.

ທັງນີ້, ເພື່ອເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມຖານບ້ານໃກ້ເຮືອນຄຽງທີ່ມີຄວາມຜູກພັນກັນມາແຕ່ບູຮານນະການ, ມີຂະນົບທຳນຽມ, ວັດທະນະທຳ, ຮີດຄອງປະເພນີ ແລະ ພາສາປາກເວົ້າທີ່ຄ້າຍຄືກັນ ລະຫວ່າງສອງປະເທດ ລາວ-ໄທ ເວົ້າລວມ ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດໃຫ້ຈະເລີນງອກງາມ ແລະ ເກີດດອກອອກຜົນຍິ່ງໆຂຶ້ນ ແລະ ເພື່ອພົບປະແລກປ່ຽນບົດຮຽນ ລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ແລະ ກຳມາທິການພັດທະນາສັງຄົມ ວຸດທິສະພາແຫ່ງລາຊະອານາຈັກໄທ ພາຍໃຕ້ຫົວຂໍ້: "ບົດບາດຂອງກຳມາທິການວັດທະນະທຳ-ສັງຄົມ ໃນການສົ່ງເສີມຄວາມສະເໝີພາບຍິງ-ຊາຍ".

ໃນການພົບປະຄັ້ງນີ້, ທັງສອງຝ່າຍໄດ້ພ້ອມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດໃນໄລຍະຜ່ານມາ ໂດຍສະເພາະແມ່ນການຢ້ຽມຢາມທາງການ ລາຊະອານາຈັກໄທ ຂອງພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໃນເດືອນຕຸລາ ປີ 2022 ແລະ ໄດ້ລົງນາມເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະສະພາ ແຫ່ງ ລາຊະອານາຈັກໄທ ໃນວັນທີ 31 ຕຸລາ 2022 ທີ່ ກຸງເທບມະຫານະຄອນ ລາຊະອານາຈັກໄທ; ນອກຈາກນັ້ນ, ຍັງໄດ້ແລກປ່ຽນຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມຂອງຄະນະຜູ້ແທນຂັ້ນສູງ ຂອງລັດຖະບານ, ບັນດາຂະແໜງການໃນລະດັບສູນກາງ ແລະ ທ້ອງຖິ່ນ, ໄດ້ມີການຮ່ວມມືກັນຈັດຕັ້ງປະຕິບັດສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ແລະ ບົດບັນທຶກຊ່ວຍຈຳ ໂດຍຜ່ານຫຼາຍກົນໄກການຮ່ວມມືທີ່ມີໝາກຜົນ; ແຈ້ງໃຫ້ຮູ້ກ່ຽວກັບສິດພາລະບົດບາດ ທີ່ຕັ້ງ ແລະ ກົງຈັກຂອງສອງອົງການນິຕິບັນຍັດ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການວັດທະນະທຳ-ສັງຄົມ ແລະ ກຳມາທິການພັດທະນາສັງຄົມ ວຸດທິສະພາແຫ່ງ ຣາຊະອະນາຈັກໄທ ແລະ ວຽກງານກ່ຽວກັບການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ໂດຍເພີ່ມບົດບາດຂອງແມ່ຍິງໃນວຽກງານນຳພາ-ຄຸ້ມຄອງ ແລະ ການມີສ່ວນຮ່ວມຂອງແມ່ຍິງໃນການພັດທະນາເສດຖະກິດ-ສັງຄົມຂອງສອງປະເທດ ນອກຈາກນີ້ຄະນະຝ່າຍລາວຍັງໄດ້ສະເໜີບາງເນື້ອໃນຈິດໃຈ ຄື: ສະເໜີໃຫ້ມີການສືບຕໍ່ແລກປ່ຽນການຢ້ຽມຢາມ ແລະ ໄປມາຫາສູ່ກັນໃຫ້ເປັນປົກກະຕິລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດລາວ ກັບກຳມາທິການພັດທະນາສັງຄົມ ແລະ ກິດຈະກຳເດັກ, ເຍົາວະຊົນ, ສະຕີ, ຜູ້ສູງອາຍຸ, ຄົນພິການ ແລະ ຜູ້ດ້ອຍໂອກາດ ວຸດທິສະພາ ແຫ່ງລາຊະອານາຈັກໄທ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນໃນການປະຕິບັດພາລະບົດບາດຂອງລັດຖະສະພາ; ໃຫ້ມີການແລກປ່ຽນຂໍ້ມູນໃນການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ ເປັນຕົ້ນການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາການຄຸ້ມຄອງ ແລະ ການປົກປ້ອງສິດຜົນປະໂຫຍດຂອງແຮງງານ, ການສົ່ງເສີມການທ່ອງ ທ່ຽວລະຫວ່າງສອງປະເທດ, ການພັດທະນາຊັບພະຍາກອນມະນຸດ ແລະ ອື່ນໆ ແລະ ສະເໜີສືບຕໍ່ສະໜັບສະໜູນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ກິດຈະກຳຮ່ວມມື ພາຍໃຕ້ບັນດາກົນໄກການຮ່ວມມືລາວ ແລະ ໄທ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ ແລະ ຄະນະຝ່າຍໄທກໍໄດ້ເຫັນດີຕໍ່ການສະເໜີດັ່ງກ່າວ ແລະ ຈະນຳເອົາໄປສືບຕໍ່ປະຕິບັດ ແລະ ສະເໜີພາກສ່ວນກ່ຽວຂ້ອງເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນອັນດີງາມໃຫ້ດີຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)



## ກະກຽມປະເມີນ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ ໃຫ້ມີຄວາມເປັນເອກະພາບ ແລະ ບັນລຸຕາມເປົ້າໝາຍທີ່ໄດ້ກຳນົດໄວ້. ໃນວັນທີ 4 ເມສາ 2023 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຄະນະຮັບຜິດຊອບ ເພື່ອກະກຽມການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມ ປັບປຸງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມມີບັນດາທ່ານຮອງປະທານສະພາແຫ່ງຊາດ, ບັນດາທ່ານປະທານ-ຮອງປະທານກຳມາທິການ, ສະຖາບັນຄົ້ນຄວ້ານິຕິກຳ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ ແຜນການຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍ 4 ສະບັບ; ແຜນການປະເມີນການຈັດຕັ້ງປະຕິບັດ 4 ກົດໝາຍ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບນຳພາ-ຊີ້ນຳການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໃນແຕ່ລະເຂດເລືອກຕັ້ງ; ລາຍງານບົດຄົ້ນຄວ້າກົດໝາຍ 4 ສະບັບ ເບື້ອງຕົ້ນ ເພື່ອເປັນບ່ອນອີງແກ່ການປະເມີນການຈັດຕັ້ງປະຕິບັດ ແລະ ການປັບປຸງກົດໝາຍດັ່ງກ່າວ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ທີ່ຈະປັບປຸງຄັ້ງນີ້ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ເຊິ່ງບັນຫາລວມຂອງການປັບປຸງກົດໝາຍ 4 ສະບັບດັ່ງກ່າວ ກໍເພື່ອເຮັດໃຫ້ມີຄວາມສະດວກໃນການຈັດຕັ້ງປະຕິບັດ ຄວນປັບປຸງເປັນກົດໝາຍສະບັບປັບປຸງ, ແຕ່ຖ້າຈະປັບປຸງຄືດັ່ງກ່າວ ຈະຕ້ອງໄດ້ປັບປຸງແຕ່ລະມາດຕາເກີນກວ່າເຄິ່ງໜຶ່ງຂອງກົດໝາຍສະບັບນັ້ນ ຖ້າຫຼຸດຈະເປັນການປັບປຸງບາງມາດຕາ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳສະບັບປັບປຸງ ປີ 2021.



## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ນາຍົກລັດຖະມົນຕີ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມປະຊຸມດ້ວຍຮູບແບບທາງໄກ (ອອນລາຍ) ມີປະທານ-ຮອງປະທານສະພາປະຊາຊົນແຂວງ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ.

ທັງນີ້, ເພື່ອເຜີຍແຜ່ ແລະ ເຊື່ອມຊຶມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 14 ກຸມພາ 2023 ວ່າດ້ວຍການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ມີຄວາມເຂົ້າໃຈເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ສາມາດສຳເລັດທັນຕາມແຜນການທີ່ວາງໄວ້ ແລະ ສາມາດນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາ ແລະ ຮັບຮອງ; ພ້ອມທັງຮັບຟັງຄຳສະເໜີ, ແລກປ່ຽນຄຳຄິດຄຳເຫັນ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ໃນການປະເມີນ ແລະ ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 14 ກຸມພາ 2023 ວ່າດ້ວຍການຕິດຕາມ ກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ເຊິ່ງຈຸດປະສົງຂອງຄຳແນະນຳສະບັບດັ່ງກ່າວ ແມ່ນເພື່ອກວດກາ ແລະ ຊຸກຍູ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳໃຫ້ສຳເລັດຕາມແຜນການ, ມີປະສິດທິພາບ ແລະ ປະສິດທິຜົນ; ເພື່ອເຮັດໃຫ້ບົດສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2017; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນສະບັບປີ2017; ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປີ 2012; ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປີ 2017, ທີ່ຈະນຳລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ ແລະ ແທດເໝາະກັບຕົວຈິງ; ເພື່ອຖອດຖອນບົດຮຽນໃຫ້ແກ່ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆໃນຕໍ່ໜ້າ. ບາດກ້າວໃນການດຳເນີນການຕິດຕາມກວດກາ ຈະດຳເນີນໄປຕາມ 3 ບາດກ້າວຄື: ບາດກ້າວທີໜຶ່ງ: ການກະກຽມຄວາມພ້ອມວຽກງານຮອບດ້ານ; ບາດກ້າວທີສອງ: ດຳເນີນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນຢູ່ສູນກາງ ແລະ ທ້ອງຖິ່ນ ແລະ ບາດກ້າວທີສາມ: ສະຫຼຸບຕີລາຄາ ແລະ ລາຍງານຄະນະປະຈຳສະພາແຫ່ງຊາດ ເພື່ອຂໍທິດຊີ້ນຳ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ບົດບາດເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ແລະ ສະພາບໍລິຫານອົງການ ໃນການຄຸ້ມຄອງ ແລະ ບໍລິຫານກອງທຶນປະກັນສັງຄົມໃນຂອບເຂດທົ່ວປະເທດ. ປັດຈຸບັນ ອປຊ ມີພະນັກງານທົ່ວປະເທດ ຈຳນວນ 399 ຄົນ, ຍິງ 217 ຄົນ ໃນນັ້ນ, ຢູ່ສູນກາງ 129 ຄົນ, ຍິງ 77 ຄົນ ແລະ ທ້ອງຖິ່ນ ຈຳນວນ 251 ຄົນ, ຍິງ 140 ຄົນ. ອົງການປະກັນສັງຄົມແຫ່ງຊາດ ຢູ່ຂັ້ນສູນກາງ ລວມມີ 11 ພະແນກການ, 29 ຂະແໜງ, ຢູ່ທ້ອງຖິ່ນມີຫ້ອງການປະກັນສັງຄົມ 17 ແຂວງ ແລະ 1 ນະຄອນຫຼວງ; ນອກນັ້ນ, ຍັງມີສູນບໍລິການປະກັນສັງຄົມຢູ່ 8 ເມືອງ. ສຳລັບການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ນັບແຕ່ປີ 1993 ໄດ້ຮັບການຈັດຕັ້ງປະຕິບັດຕາມດຳລັດເລກທີ 178/ນຍ ໂດຍແມ່ນກົມປະກັນສັງຄົມເປັນຜູ້ຈັດຕັ້ງປະຕິບັດ, ໃນປີ 2001 ອົງການປະກັນສັງຄົມພາກວິສາຫະກິດ (ອປສ) ໄດ້ຮັບການຈັດຕັ້ງປະຕິບັດຕາມດຳລັດເລກທີ 207/ນຍ ເຊິ່ງກຳນົດໃຫ້ເປັນກອງທຶນປະກັນສັງຄົມຢ່າງເປັນລະບົບ ໂດຍມີສະພາບໍລິຫານເປັນອົງການບໍລິຫານສູງສຸດ; ໃນປີ 2008 ລະບົບປະກັນສັງຄົມພາກລັດໄດ້ຮັບການປັບປຸງຕາມດຳລັດເລກທີ 70/ນຍ ໂດຍແມ່ນອົງການປະກັນສັງຄົມແຫ່ງລັດ (ອປລ) ເປັນຜູ້ຈັດຕັ້ງປະຕິບັດ ເຊິ່ງໄດ້ກຳນົດອັດຕາເງິນສົມທົບທັງໝົດ 16,5%; ໃນນັ້ນ ພະນັກງານ, ທະຫານ, ຕຳຫລວດ ສົມທົບຈາກ 6% ມາເປັນ 8% ແລະ ລັດຖະບານໄດ້ປະກອບເງິນສົມທົບ 8,5% ຂອງຄັງເງິນເດືອນ ແລະ ເພີ່ມນະໂຍບາຍຈາກ 5 ອຸດໜູນມາເປັນ 8 ອຸດໜູນ. ຈາກການຂະຫຍາຍຕົວຂອງວຽກງານປະກັນສັງຄົມທັງພາກລັດ ແລະ ພາກວິສະຫະກິດ, ໃນປີ 2014 ໄດ້ໂຮມລະບົບປະກັນສັງຄົມທັງສອງພາກດັ່ງກ່າວເຂົ້າກັນເປັນກອງທຶນປະກັນສັງຄົມແຫ່ງຊາດ ໂດຍແມ່ນຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ (ຫກປຊ) ເປັນຜູ້ຈັດຕັ້ງປະຕິບັດຕາມກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 34/ສພຊ, ແລະ ໃນທ້າຍປີ 2019 ໄດ້ໂຮມກົມປະກັນສັງຄົມ ແລະ ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ເຂົ້າກັນເປັນ “ອົງການປະກັນສັງຄົມແຫ່ງຊາດ (ອປຊ) ເຄື່ອນໄຫວພາຍໃຕ້ກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ ເລກທີ 54/ສພຊ ຈົນມາເຖິງປັດຈຸບັນ. ວຽກງານປະກັນສັງຄົມໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ ໂດຍມີກົງຈັກການຈັດຕັ້ງຂອງຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍມີກົງຈັກການຈັດຕັ້ງຂອງຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນ, ມີສະພາບໍລິຫານທີ່ປະກອບດ້ວຍຜູ້ຕາງໜ້າໃຫ້ລັດຖະບານ, ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ເພື່ອເປັນທີ່ປຶກສາ ແລະ ຄຸ້ມຄອງກອງທຶນປະກັນສັງຄົມໃຫ້ມີຄວາມໂປ່ງໃສ, ເຂັ້ມແຂງ ແລະ ຍືນຍົງ, ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກປະກັນສັງຄົມ. ມາເຖິງປັດຈຸບັນມີຜູ້ປະກັນຕົນທັງໝົດ 350.869 ຄົນ, ຍິງ 153.832 ຄົນ; ໃນນີ້, ພາກລັດ 179.047 ຄົນ, ຍິງ 84.308 ຄົນ, ພາກວິສະຫະກິດ 153.517 ຄົນ, ຍິງ 61.626 ຄົນ ແລະ ສະໝັກໃຈ 18.305 ຄົນ, ຍິງ 7.898 ຄົນ.

ໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນໃຫ້ທິດຊີ້ນຳ ເພື່ອເປັນທິດທາງໃນການດຳເນີນວຽກງານລວມຂອງ ອປຊ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຂອງອົງການປະກັນສັງຄົມແຫ່ງຊາດໃນໄລຍະທີ່ຜ່ານມາ ເວົ້າລວມ, ເວົ້າສະເພາະກໍຄືການປະຕິບັດວຽກງານຕົວຈິງເພື່ອເພີ່ມທະວີການຂະຫຍາຍອັດຕາການປົກຄຸມວຽກງານປະກັນສັງຄົມ ກໍຄືເຮັດໃຫ້ທຸກຄົນໄດ້ເຂົ້າເຖິງການຄຸ້ມຄອງທາງດ້ານສະຫວັດດີການ ຄຽງຄູ່ກັບການຮັບຄຳຮ້ອງຮຽນຂອງສັງຄົມຢ່າງເປັນປົກກະຕິ ເພື່ອປັບປຸງຂອດໃຫ້ບໍລິການຂອງປະກັນສັງຄົມ ແລະ ການບໍລິການຂອງໂຮງໝໍໃຫ້ເປັນທີ່ເພິ່ງພໍໃຈແກ່ສັງຄົມຍິ່ງໆຂຶ້ນ ເຊິ່ງສະພາແຫ່ງຊາດກໍໄດ້ມີແຜນເຮັດວຽກຮ່ວມກັນກັບອົງການປະກັນສັງຄົມແຫ່ງຊາດ ແລະ ຫ້ອງການປະກັນສຸຂະພາບແຫ່ງຊາດ ກະຊວງສາທາລະນະສຸກ ເພື່ອທົບທວນບັນຫາສຳຄັນຕ່າງໆທີ່ເປັນອຸປະສັກ ແລະ ຂອດຈຳກັດໃນການໃຫ້ບໍລິການຂອງໂຮງໝໍ; ລວມໄປເຖິງການປະສານສົມທົບ ເພື່ອຄົ້ນຄວ້າເຂົ້າໃນການປັບປຸງກົດໝາຍວ່າດ້ວຍການປະກັນສັງຄົມ ຕາມວາລະການປັບປຸງກົດໝາຍ.

ພ້ອມນັ້ນ, ຄະນະຍັງໄດ້ຢ້ຽມຢາມບັນດາພະແນກການພາຍໃນສຳນັກງານໃຫຍ່ຂອງອົງການປະກັນສັງຄົມແຫ່ງຊາດ.

## ສຳເລັດການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນ




(ສພຊ) ວັນທີ 21 ມີນາ 2023 ທີ່ຫ້ອງສະໂມສອນເມືອງຂວາ ແຂວງຜົ້ງສາລີ, ທ່ານ ສົມຈິດ ທັບລະກອນ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງຂວາ ແຂວງຜົ້ງສາລີ ໄດ້ສຳເລັດການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II; ເຂົ້າຮ່ວມມີທ່ານເຈົ້າເມືອງ, ບັນດາທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ກອງບັນຊາການທະຫານເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ, ອົງການແນວລາວສ້າງຊາດເມືອງ, ສະຫະພັນນັກຮົບເກົ່າ, ໜ່ວຍບໍລິການຂອງລັດວິສະຫະກິດປະຈຳເມືອງ, ພະນັກງານ-ລັດຖະກອນ, ພະນັກງານບຳນານ ແລະ ອົງການຈັດຕັ້ງບ້ານ ອ້ອມຂ້າງເທສະບານເມືອງ, ບັນດາບ້ານເປົ້າໝາຍ.

ທັງນີ້, ກໍເພື່ອລາຍງານໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຊາບການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ, ສະມາຊິກສະພາປະຊາຊົນແຂວງ ແນໃສ່ຮັບປະກັນໃຫ້ຖັນແຖວພະນັກງານ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຊາວຜູ້ອອກແຮງງານ, ນັກຮຽນຮູ້, ປັນຍາຊົນ ແລະ ປະຊາຊົນຊາວແຂວງຜົ້ງສາລີ ຮັບຮູ້ ແລະ ເຊື່ອມຊຶມເຖິງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II; ເປັນການຊຸກຍູ້ໃຫ້ທຸກພາກສ່ວນປະກອບສ່ວນໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຫ່ງຊາດ ແລະ ຂອງແຂວງ, ເພື່ອເຮັດໃຫ້ບັນຫາສຳຄັນພື້ນຖານຂອງຊາດທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ.

ເນື້ອໃນທີ່ມາຈັດຕັ້ງເຜີຍແຜ່ປະກອບມີ: ບັນດາມະຕິກອງປະຊຸມຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 22 ມະຕິ ແລະ ສະພາປະຊາຊົນແຂວງ ຊຸດທີ II ຈຳນວນ 9 ມະຕິ ເຊິ່ງເນື້ອໃນຕົ້ນຕໍຂອງການຈັດຕັ້ງຜັນຂະຫຍາຍໃນຄັ້ງນີ້ ມີຫຼາຍວຽກທີ່ສຳຄັນ ແລະ ພົ້ນເດັ່ນທີ່ທາງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ແລະ ສະມາຊິກສະພາປະຊາຊົນແຂວງ ຍົກຂຶ້ນມາເຜີຍແຜ່ ເປັນຕົ້ນແມ່ນວຽກງານບຸກຄະລາກອນຂອງຂັ້ນສູນກາງ ແລະ ຂັ້ນແຂວງ; ວຽກງານຂົງເຂດລັດຖະບານ, ອົງການປົກຄອງແຂວງ; ວຽກງານຂົງເຂດສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ວຽກງານສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂອງແຂວງ.

ກ່ອນໜ້ານັ້ນ, ທ່ານ ສົມຈິດ ທັບລະກອນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງຂວາ ແຂວງຜົ້ງສາລີ ໄດ້ເຄື່ອນໄຫວຢູ່ບັນດາບ້ານເປົ້າໝາຍ ໂດຍແບ່ງອອກເປັນ 2 ທີມງານ ຄື: ທີມງານທີ 1 ປະກອບມີທ່ານ ສົມຈິດ ທັບລະກອນ ແລະ ທ່ານ ພົມມີ ອິນມະສອນ ປະທານກວດກາເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງຂວາ ເຄື່ອນໄຫວທີ່ບ້ານຢາງເຕີຍ, ບ້ານຫ້ວຍສະແຫຼ່ງ, ບ້ານອີບທັບ, ບ້ານນາ, ບ້ານໂພໄຊເໜືອ, ບ້ານໂພໄຊໃຕ້, ບ້ານ ເມືອງຂວາ, ຫ້ວຍຢາງ; ທີມງານທີ 2 ປະກອບມີທ່ານ ບຸນສະລີ ຈິດດາພອນ ຫົວໜ້າພະແນກສາທາລະນະສຸກແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງຂວາ, ທ່ານ ນາງ ລຸນ ຄຳວົງໃຈ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ອຸເດັດ ມະນີວົງ ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງຂວາ ເຄື່ອນໄຫວທີ່ບ້ານອົມຕະລາ, ບ້ານກອງຮັດ, ບ້ານພູວຽງ, ບ້ານດັບກະຈອກ, ບ້ານມົກແພກແລະບ້ານຫ້ວຍທອງ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



## ສສຊ ແລະ ສສຂ ຫຼວງນ້ຳທາ ພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ໃນລະຫວ່າງວັນທີ 13-17 ມີນາ 2023 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຫຼວງນ້ຳທາ ໄດ້ເຄື່ອນໄຫວພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນແມ່ນທ່ານ ກົງເພັດ ແກ້ວບົວພາ ສສຊ ປະຈຳເຂດເລືອກຕັ້ງ, ຮອງປະທານສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍບັນດາ ສສຂ ປະຈຳເຂດເລືອກຕັ້ງເມືອງລອງ ໄດ້ເຄື່ອນໄຫວຢູ່ເມືອງລອງ ແຂວງຫຼວງນ້ຳທາ 3 ຈຸດຄື: ບ້ານບໍ່ໃໝ່, ບ້ານຈ່າປີ ແລະ ຢູ່ສະໂມສອນເມືອງລອງ; ມີເຈົ້າເມືອງ, ກຳມະການພັກເມືອງ, ພະນັກງານບຳນານ, ພະນັກງານ-ລັດຖະກອນ, ນາຍທະຫານ, ນາຍຕຳຫຼວດ, ຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານ ພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມທັງໝົດ 294 ຄົນ ຍິງ 107ຄົນ.

ທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍບັນດາ ສສຂ ປະຈຳເຂດເລືອກຕັ້ງເມືອງສິງ ໄດ້ເຄື່ອນໄຫວຢູ່ເມືອງສິງ ແຂວງຫຼວງນ້ຳທາ ມີ 3 ຈຸດຄື: ບ້ານຜີເຍີ, ບ້ານນ້ຳເຫຼັກ ແລະ ບ້ານບວກຄູ; ມີຄະນະພັກຮາກຖານກຸ່ມບ້ານ, ປກສ ກຸ່ມບ້ານ, ນາຍບ້ານ ພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມ ທັງໝົດ 300 ກວ່າຄົນ.

ທ່ານ ນາງ ເກສອນ ແສງຍະວົງ ສສຊ ປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍບັນດາ ສສຂ ປະຈຳເຂດເລືອກຕັ້ງເມືອງນາແລ ໄດ້ເຄື່ອນໄຫວຢູ່ເມືອງນາແລ ແຂວງຫຼວງນ້ຳທາ 3 ຈຸດຄື: ບ້ານໜອງຄຳ, ບ້ານເລົາ ແລະ ຢູ່ສະໂມສອນເມືອງນາແລ; ມີເຈົ້າເມືອງ, ກຳມະການພັກເມືອງ, ພະນັກງານບຳນານ, ພະນັກງານ-ລັດຖະກອນ, ນາຍທະຫານ, ນາຍຕຳຫວດ, ຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານ ພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມທັງໝົດ 200 ຄົນ ຍິງ 61 ຄົນ.

ໃນການເຄື່ອນໄຫວແຕ່ລະຈຸດ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງຊາດຄື: ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022; ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022; ບົດສະຫຼຸບການເຄື່ອນໄຫວວຽກງານຂອງອົງການກວດສອບແຫ່ງລັດ ປະຈຳປີ 2022, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງອົງການກວດກາແຫ່ງລັດ ປະຈຳປີ 2022; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ.

ພ້ອມນັ້ນ, ໄດ້ຮັບຟັງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022; ບົດລາຍງານການເຄື່ອນໄຫວວຽກງານອົງການກວດສອບ ປະຈຳພາກເໜືອ ປີ 2022 ແລະ ທິດທາງແຜນການ ປີ 2023, ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ພິຈາລະນາ, ພິຈາລະນາຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈຳນວນ 3 ສະບັບຄື ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແຂວງຫຼວງນ້ຳທາ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ;ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງວຽກງານໄປສະນີພາຍໃນແຂວງຫຼວງນ້ຳທາ. ນອກນັ້ນ, ສສຊ ແລະ ສສຂ ຍັງໄດ້ເນັ້ນໜັກໃຫ້ພໍ່ແມ່ປະຊາຊົນເອົາໃຈໃສ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເພື່ອເຮັດໃຫ້ບ້ານເມືອງມີຄວາມສະຫງົບ ແລະ ພ້ອມກັນສ້າງສາພັດທະນາບ້ານ, ພັດທະນາຄອບຄົວໃຫ້ຮັ່ງມີຂຶ້ນເປັນກ້າວໆ.

# ເຊື່ອມຊຶມເອກະສານສຳຄັນຂອງພັກ-ຂອງຊາດ



(ສພຊ) ວັນທີ 22 ມີນາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໜ່ວຍພັກສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານສຳຄັນຂອງພັກ-ຂອງຊາດ ໂດຍການເປັນປະທານຂອງສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ມີບັນດາສະຫາຍຄະນະພັກ ແລະ ສະມາຊິກພັກສົມບູນ-ສຳຮອງພາຍໃນໜ່ວຍພັກສະພາປະຊາຊົນແຂວງເຂົ້າຮ່ວມ.

ບັນດາເອກະສານທີ່ນຳມາເຜີຍແຜ່ໃນຄັ້ງນີ້ ປະກອບມີ: ມູນເຊື້ອແຫ່ງການນຳພາຂອງພັກ ເຂົ້າໃນການຈັດຕັ້ງປະຕິບັດພາລະກິດປ່ຽນແປງໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງ ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (22 ມີນາ 1955-22 ມີນາ 2023), ເອກະສານວັນຄຽດແຄ້ນຂອງປະຊາຊົນລາວ-ວັນນັກຮົບເສຍອົງຄະ ແລະ ວັນເສຍສະຫຼະຊີວິດເພື່ອປະເທດຊາດ 21/3/1946 ສະເໜີໂດຍສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ ແລະ ໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ XI, ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງອຸດົມໄຊ ຄັ້ງທີ 7 ສະໄໝທີ IX ສະເໜີໂດຍສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ.

ຫຼັງຈາກນັ້ນ, ຄະນະພັກໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະພັກສະພາປະຊົນແຂວງປະຈຳເດືອນ 3, ວາງທິດທາງແຜນການ ປະຈຳເດືອນ 4 ປີ 2023 ແລະ ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳ ປະຈຳໄຕມາດ I ຕົ້ນປີ ແລະ ວາງທິດທາງແຜນການປະຈຳ 9 ເດືອນທ້າຍປີ 2023.

ພ້ອມດຽວນັ້ນ, ບັນດາສະມາຊິກພັກຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວດັ່ງກ່າວຢ່າງກົງໄປກົງມາ, ຕຳນິສິ່ງຂ່າວ, ກໍ່ສ້າງເຊິ່ງກັນແລະກັນພາຍໃນໜ່ວຍພັກຢ່າງເປັນປົກກະຕິ.

(ແສງພອນ ອິນນະລົງ)

# ພົບປະປະຊາຊົນ ຢູ່ຈຸດສຸມພັດທະນາທີ 1 ບ້ານທ່າແຕງໃຕ້ ເມືອງທ່າແຕງ

(ສພຊ) ໃນຕອນເຊົ້າວັນທີ 20 ມີນາ 2023 ທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານສະພາປະຊາຊົນແຂວງເຊກອງ ທັງເປັນສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງທ່າແຕງ ໄດ້ເຄື່ອນໄຫວພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງເຊກອງ ຊຸດທີ II ຢູ່ ຈຸດສຸມພັດທະນາທີ 1 ບ້ານທ່າແຕງໃຕ້ ໂດຍໄດ້ຮັບການຕ້ອນຮັບຈາກອຳນາດການປົກຄອງເມືອງ, ບ້ານ ແລະ ພໍ່ແມ່ປະຊາຊົນບ້ານດັ່ງກ່າວຢ່າງອົບອຸ່ນ.

ທ່ານ ວິວອນ ວິນກະເສີມສຸກ ເລຂາຄະນະພັກຮາກຖານ, ນາຍບ້ານໆທ່າແຕງໃຕ້ ໄດ້ກ່າວຕ້ອນຮັບ ແລະ ລາຍງານສະພາບຈຸພິເສດ, ການຈັດຕັ້ງປະຕິບັດວຽກງານຂອງບ້ານ.



ຈາກນັ້ນ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຜັດປ່ຽນກັນຂຶ້ນໂອ້ລົມ ເຊິ່ງໄດ້ຍົກໃຫ້ເຫັນເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງເຊກອງ ຊຸດທີ II ເພື່ອເຮັດໃຫ້ພໍ່ແມ່ປະຊາຊົນຮັບຮູ້ເຊື່ອມຊຶມເອົາເນື້ອໃນດັ່ງກ່າວ ໄປຈັດຕັ້ງຜັນຂະຫຍາຍໃຫ້ກວ້າງຂວາງ.

ການເຄື່ອນໄຫວຄັ້ງນີ້ ກໍເພື່ອພົບປະຢ້ຽມຢາມຖາມຂ່າວ ແລະ ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີ ແລະ ຄວາມຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ ເຊິ່ງບັນຫາທີ່ປະຊາຊົນສະເໜີແມ່ນກ່ຽວກັບການກໍ່ສ້າງຫ້ອງການບ້ານ, ການກໍ່ສ້າງຂົວຂ້າມຫ້ວຍນ້ຳໃສ ແລະ ຂໍທຶນການກໍ່ສ້າງຕໍ່ເຕີມຊົນລະປະທານຂອງບ້ານໃຫ້ສຳເລັດ ຕໍ່ກັບຄຳສະເໜີດັ່ງກ່າວ ສະມາຊິກສະພາປະຊາຊົນແຂວງແມ່ນຈະໄດ້ນຳໄປສະເໜີຕໍ່ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ແກ້ໄຂຕາມຄວາມເໝາະສົມ. ພ້ອມນັ້ນ, ຄະນະຍັງໄດ້ສືບຕໍ່ເຄື່ອນໄຫວຢູ່ບ້ານໂກງຕາຢູນ, ບ້ານຕຸ້ມຍໍ, ບ້ານກົກພຸງເໜືອ ແລະ ບ້ານ ແສນ ຄາດວ່າຈະສຳເລັດໃນທ້າຍອາທິດນີ້.

(ນາລີວັນ)

# ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພົບປະປະຊາຊົນຜູ້ມີສິດເລືອກຕັ້ງຢູ່ເມືອງບົວລະພາ

(ສພຊ) ໃນລະຫວ່າງວັນທີ 21-23 ມີນາ 2023 ທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງຄຳມ່ວນ ປະຈຳເຂດເລືອກຕັ້ງເມືອງບົວລະພາ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງທີ່ຕິດພັນກັບການໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ຢູ່ 6 ຈຸດ, ຂອງເມືອງບົວລະພາ ຄື: ບ້ານໂພນສ້າງໄຟ, ກະແຕ້, ຊອກ, ກະຈາມໃຫຍ່, ນາຕັ້ງໃຈ ແລະ ບ້ານແສນພັນ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມມີບັນດາທ່ານຄະນະພັກເມືອງ, ອຳນາດການປົກຄອງບ້ານ ຕະຫຼອດຮອດປະຊາຊົນບັນດາເຜົ່າ; ເຂົ້າຮ່ວມທັງໝົດ 810 ເທື່ອຄົນ ຍິງ 412 ເທື່ອຄົນ.



ການເຄື່ອນໄຫວໃນຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍສັງເຂບຈາກຕາງໜ້າອຳນາດການປົກຄອງບ້ານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ທິດທາງແຜນການໃນຕໍ່ໜ້າ. ຈາກນັ້ນ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ເປັນຕົ້ນແມ່ນກອງປະຊຸມໄດ້ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ແຜນການ ປີ 2023; ບົດລາຍງານຂອງລັດຖະບານກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023; ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023; ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສະພາແຫ່ງຊາດ ແລະ ມະຕິວ່າດ້ວຍການຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 3 ສະບັບ ແລະ ກົດໝາຍປັບປຸງ 9 ສະບັບ. ພ້ອມນັ້ນ, ຄະນະສະມາຊິກສະພາປະຊາຊົນແຂວງຄຳມ່ວນ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II.

ໂອກາດດຽວກັນນີ້, ຄະນະຜູ້ແທນ ໄດ້ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນໂດຍສ່ວນຫຼາຍແມ່ນກ່ຽວກັບການສ້າງສາພັດທະນາພື້ນຖານໂຄງລ່າງເປັນຕົ້ນ: ເສັ້ນທາງ, ການຂະຫຍາຍຕາຂ່າຍໄຟຟ້າ, ຊົນລະປະທານ, ສ້າງໂຮງຮຽນ, ສຸກສາລາ ຕໍ່ກັບຄຳສະເໜີດັ່ງກ່າວ ກໍໄດ້ອະທິບາຍຊີ້ແຈງ ແລະ ບາງຄຳສະເໜີທີ່ຕິດກັບຫຼາຍພາກສ່ວນກໍຈະໄດ້ນຳເອົາໄປຄົ້ນຄວ້າສັງລວມມອບໃຫ້ຄະນະກຳມະການທີ່ກ່ຽວຂ້ອງປະສານສົມທົບກັບພາກສ່ວນຕ່າງໆຂອງອົງການປົກຄອງແຂວງ ຄົ້ນຄວ້າແກ້ໄຂ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ພ້ອມນັ້ນ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະ ຍັງໄດ້ນຳເອົາເຄື່ອງອຸປະໂພ-ບໍລິໂພກ ມອບໃຫ້ຄອບຄົວທີ່ຂາດເຂີນຈຳນວນ 8 ຄອບຄົວ.

(ເອື້ອ ມະໂນສິງ)



# ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ 2 ວາລະແຫ່ງຊາດ ຢູ່ເມືອງຄົງເຊໂດນ

(ສພຊ) ໃນລະຫວ່າງວັນທີ 21-22 ມີນາ 2023 ສະພາປະຊາຊົນແຂວງສາລະວັນ ໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈໍາປີ 2023, ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ທີ່ເມືອງຄົງເຊໂດນ ແຂວງສາລະວັນ ນໍາພາຄະນະໂດຍ ທ່ານ ສີເຣັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ; ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງທ່ານ ປອ. ສະໄໝ ໂພທິສານ ເຈົ້າເມືອງຄົງເຊໂດນ, ມີຕາງໜ້າຈາກພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງ ແລະ ວິຊາການຂອງສະພາປະຊາຊົນແຂວງສາລະວັນ.



ການເຄື່ອນໄຫວຄັ້ງນີ້ ກໍເພື່ອເປັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ກໍານົດໄວ້ໃນກົດໝາຍຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ທັງເປັນການຢ້ຽມຢາມພົບປະຜູ້ມີສິດເລືອກຕັ້ງຂອງຕົນ ແລະ ເກັບກໍາຂໍ້ມູນຄໍາສະເໜີທາງສຽງຂອງພໍ່ແມ່ປະຊາຊົນ, ຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈໍາປີ 2023, ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຂອງບັນດາພະແນກການ, ບັນດາເມືອງ ແລະ ກຸ່ມບ້ານ ໃນໄລຍະຜ່ານມາ.

ໃນໂອກາດນີ້, ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມຮ່ວມກັບອົງການປົກຄອງເມືອງຄົງເຊໂດນ ຢູ່ທີ່ສະໂມສອນຂອງເມືອງ ເຊິ່ງໄດ້ຮັບຟັງການລາຍງານຈາກເຈົ້າເມືອງ ເມືອງຄົງເຊໂດນ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດໃນໄລຍະຜ່ານມາ, ຮັບຟັງການລາຍງານຄວາມຄືບໜ້າ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ພ້ອມທັງຮ່ວມກັນສົນທະນາແລກປ່ຽນຄໍາຄິດເຫັນ ເພື່ອຊອກຫາວິທີທາງແກ້ໄຂບາງບັນຫາຕໍ່ຂໍ້ຫຍຸ້ງຍາກທີ່ພົບເຫັນຂອງການຈັດຕັ້ງປະຕິບັດໃນໄລຍະຜ່ານມາ; ພ້ອມນັ້ນ, ຄະນະຍັງໄດ້ເຄື່ອນໄຫວພາກສະໜາມ ເພື່ອຕິດຕາມ-ກວດກາຄວາມຄືບໜ້າບັນດາໂຄງການເຊົ່າ-ສໍາປະທານລົງທຶນຂອງລັດ ເປັນຕົ້ນແມ່ນໄດ້ເຄື່ອນໄຫວຕິດຕາມຊຸກຍູ້ໂຄງການສົ່ງເສີມການປູກເຂົ້າທັນສະໄໝ ຢູ່ຈຸດບ້ານໂອກາດ; ຕິດຕາມ-ກວດກາໂຄງການເຊົ່າ-ສໍາປະທານທີ່ດິນ ກໍ່ສ້າງຂົວຈົມຂອງບໍລິສັດຕິ່ງວິໄລ ກໍ່ສ້າງສ້ອມແປງຂົວທາງຈໍາກັດ; ຕິດຕາມ-ກວດກາໂຄງການເຊົ່າ-ສໍາປະທານຕະຫຼາດຝາບັນດານແກ່ນ ແລະ ຕິດຕາມ-ກວດກາຄວາມຄືບໜ້າໂຄງການຊົນລະປະທານບ້ານແກ້ງຫວດ.

ນອກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງຂອງຕົນ ຈໍານວນ 2 ຈຸດຄື: ຈຸດບ້ານຫີນສິ້ວ ແລະ ບ້ານນາປີ່ງ; ມີຜູ້ເຂົ້າຮ່ວມຟັງທັງໝົດ 200 ກວ່າຄົນ ທັງນີ້, ກໍເພື່ອນໍາເອົາເນື້ອໃນຈິດໃຈຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ I ກໍຄືມະຕິສໍາຄັນຕ່າງໆ ໂຄສະນາເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ ທັງເກັບກໍາຄວາມຂັດຂ້ອງໝອງໃຈ ຄໍາສະເໜີຂອງພໍ່ແມ່ປະຊາຊົນພາຍໃນບ້ານ.

ການເຄື່ອນໄຫວໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຂີດຄວາມສາມາດ ແລະ ປະສິດທິພາບສະພາປະຊາຊົນຂັ້ນແຂວງ ໃນ ສປປລາວ STEPS.

(ດີລໍາພົນ ພົມມະຈັນ)



# ສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງນານ ພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ໃນລະຫວ່າງວັນທີ 15-16 ມີນາ 2023 ທ່ານ ນາງ ແກ້ວລາ ມະນີຈິດ ສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງນານ, ເລຂາທິການສະພາປະຊາຊົນແຂວງຫຼວງພະບາງ ໄດ້ເຄື່ອນໄຫວຈັດຕັ້ງຜັນຂະຫຍາຍຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຢູ່ເມືອງນານ ແຂວງຫຼວງພະບາງ ລວມທັງໝົດ 5 ບ້ານຄື: ນານວນ, ພູຈອງ, ນາລິນ, ຫາດຊາຍຄໍາ ແລະ ຄົກຕົມ; ມີຜູ້ເຂົ້າຮ່ວມຮັບຟັງ ທັງໝົດ 313 ທ່ານ ຍິງ 165 ທ່ານ.

ການເຄື່ອນໄຫວວຽກງານຄັ້ງນີ້, ແມ່ນນໍາເອົາເນື້ອໃນຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ມາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ບັນຫາສໍາຄັນຕ່າງໆ ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມຂອງສະພາປະຊາຊົນແຂວງ ຊຸດທີ II ພ້ອມທັງໄດ້ຮັບຟັງຄໍາຄິດຄໍາເຫັນ, ຄໍາສະເໜີຂອງຜູ້ມີສິດເລືອກຕັ້ງ ເຊິ່ງເຫັນໄດ້ຫຼາຍບັນຫາທີ່ຕິດພັນກັບວຽກງານແຜນພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານອື່ນໆຈໍານວນໜຶ່ງ.

ໃນຕອນທ້າຍ, ທ່ານ ນາງ ແກ້ວລາ ມະນີຈິດ ໄດ້ອະທິບາຍຊີ້ແຈງຕໍ່ຄໍາສະເໜີຕ່າງໆໃຫ້ຜູ້ມີສິດເລືອກຕັ້ງເຂົ້າໃຈກັບທີ່ ແລະ ຮັບເອົາບາງຄໍາສະເໜີ ເພື່ອນໍາໄປຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ ແລະ ແກ້ໄຂໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ພ້ອມດຽວກັນນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ແຕ່ລະບ້ານ, ເອົາໃຈໃສ່ຍົກສູງ, ຄວາມສາມັກຄີພາຍໃນບ້ານໃຫ້ໜັກແໜ້ນ, ເປັນເຈົ້າການໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ເພື່ອໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຂົ້າໃຈຢ່າງທົ່ວເຖິງ ແລະ ບັນຫາອື່ນໆ.

(ຂ່າວ: ນາງ ຄໍາຫຼ້າ ພອນພິລາ; ພາບ ນາງ ວຽນ ດວງເງິນ)

# ປາຖະກະຖາວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ແລະ ວັນລະນຶກນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ

(ສພຊ) ໃນວັນທີ 22 ມີນາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໄດ້ຈັດຕັ້ງພິທີປາຖະກະຖາວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ (22/3/1955-22/3/2023) ແລະ ວັນລະນຶກນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 77 ປີ (21/3/1946-21/3/2023) ໂດຍການເປັນປະທານຂອງ ສະຫາຍ ສົມສັກ ດອນຈານິດ ກໍາມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງຫົວພັນ; ມີບັນດາທ່ານຄະນະປະຈໍາ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງຫົວພັນເຂົ້າຮ່ວມຢ່າງພ້ອມພຽງ.



ພິທີປາຖະກະຖາຄັ້ງນີ້, ໄດ້ຮັບຟັງການເຜີຍແຜ່ໂດຍສະຫາຍ ສົມສັກ ດອນຈານິດ ແລະ ສະຫາຍ ຄໍາຟອງ ກົ້ວມີໄຊ ຮອງເລຂາໜ່ວຍພັກ, ກໍາມະການຄະນະປະຈໍາ, ເລຂາທິການສະພາປະຊາຊົນແຂວງຫົວພັນ. ທັງນີ້, ແມ່ນເພື່ອປະຕິບັດຕາມແຈ້ງການແນະນໍາຂອງຄະນະໂຄສະນາອົບຮົມແຂວງ ສະບັບເລກທີ 112/ຄອຂ, ລົງວັນທີ 22 ມີນາ 2023 ແລະ ເພື່ອເຮັດໃຫ້ບັນດາສະຫາຍສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງຫົວພັນ ໄດ້ຮັບຮູ້, ເຂົ້າໃຈ ແລະ ກໍາແໜ້ນ ພ້ອມທັງເປັນການທົບທວນຫວນຄືນມູນເຊື້ອ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງການປະຕິວັດ ພາຍໃຕ້ການນໍາພາ-ຊີ້ນໍາຂອງຄະນະພັກປະຊາຊົນ ປະຕິວັດລາວ ຕະຫຼອດໄລຍະ 68 ປີຜ່ານມາ ແລະ ລະນຶກວັນນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 77 ປີ; ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອ ແລະ ທາດແທ້ຂອງພັກເຮົາ ເຂົ້າໃນການນໍາພາ-ຊີ້ນໍາຈັດຕັ້ງປະຕິບັດພາລະກິດປ່ຽນແປງໃໝ່ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງຫົວພັນ ພ້ອມທັງເປັນການສ້າງຄວາມຮັບຮູ້ຢ່າງເລິກເຊິ່ງ ເຖິງຄວາມປີຊາສາມາດ ແລະ ຄວາມສະຫຼາດສ່ອງໃສຂອງພັກ ໃນການນໍາພາຂະບວນການຕໍ່ສູ້ປົດປ່ອຍຊາດ ກໍຄືການນໍາພາປະຕິວັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອນໍາພາປະເທດຊາດກ້າວຂຶ້ນສູ່ຄວາມວັດທະນາຖາວອນ ແລະ ເພື່ອພ້ອມກັນລະນຶກເຖິງຄຸນງາມຄວາມດີ ແລະ ນໍ້າໃຈເສຍສະຫຼະອັນສູງສົ່ງຂອງບັນດານັກຮົບທີ່ອຸທິດ ເພື່ອປະເທດຊາດໃນຂະບວນການຕໍ່ສູ້ປົດປ່ອຍຊາດ ທີ່ມີຫຼາຍເຫດການປະຫວັດສາດ ເຊິ່ງປວງຊົນລາວທັງຊາດບໍ່ມີວັນລືມ.

(ພາບ ແລະ ຂ່າວ ສພຂ ຫົວພັນ)




# ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

7. ຜູ້ມີພູມລຳເນົາ ຢູ່ ສປປ ລາວ ໝາຍເຖິງ:

- ພົນລະເມືອງລາວ ທີ່ຢູ່ ສປປ ລາວ;
- ພົນລະເມືອງລາວ ທີ່ໄປສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ;
- ພົນລະເມືອງລາວ ທີ່ໄປຢູ່ຕ່າງປະເທດ ບໍ່ເກີນໜຶ່ງປີ ຍົກເວັ້ນເຈົ້າໜ້າທີ່ ຫຼື ພະນັກງານລາວ ທີ່ປະຈຳຢູ່ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ຢູ່ຕ່າງປະເທດ;
- ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມຂອງ ສປປ ລາວ ທີ່ເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດ;
- ບຸກຄົນ, ນິຕິບຸກຄົນລາວ ຫຼື ຕ່າງປະເທດ ທີ່ຢູ່ ສປປ ລາວ ຊຶ່ງໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ລວມທັງຫ້ອງການຕົວແທນຂອງນິຕິບຸກຄົນດັ່ງກ່າວ ທີ່ຕັ້ງຢູ່ຕ່າງປະເທດບໍ່ເກີນໜຶ່ງປີ;
- ຄົນຕ່າງປະເທດທີ່ເຄື່ອນໄຫວວຽກງານ ຢູ່ ສປປ ລາວ ເກີນໜຶ່ງປີ ຊຶ່ງບໍ່ແມ່ນເຈົ້າໜ້າທີ່ ຫຼື ພະນັກງານຂອງສະຖານທູດ, ສະຖານກົງສຸນຂອງຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
- ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ທຳມາຫາກິນຢ່າງຖາວອນ ຢູ່ ສປປ ລາວ.

8. ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ໝາຍເຖິງ:

ບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດ ທີ່ຢູ່ຕ່າງປະເທດ;

ຄົນຕ່າງປະເທດທີ່ມາສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ ສປປລາວ;

ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ສຳນັກງານຜູ້ຕາງໜ້າປະຈຳອົງການຈັດຕັ້ງສາກົນ ແລະ ເຈົ້າໜ້າທີ່ ຫຼື ພະນັກງານຕ່າງປະເທດຂອງອົງການຈັດຕັ້ງດັ່ງກ່າວ, ທີ່ປຶກສາ, ຜູ້ຊ່ຽວຊານຕ່າງປະເທດ ທີ່ມາປະຈຳຢູ່ ສປປ ລາວ ລວມທັງຄອບຄົວຂອງພວກກ່ຽວ;

ຄົນຕ່າງປະເທດທີ່ມາຢູ່ ສປປ ລາວ ບໍ່ເກີນ ໜຶ່ງປີ;

ຫ້ອງການຕົວແທນຂອງນິຕິບຸກຄົນຕ່າງປະເທດ ທີ່ມາຕັ້ງຢູ່ ສປປ ລາວ ບໍ່ເກີນໜຶ່ງປີ;

ພົນລະເມືອງລາວທີ່ໄປຢູ່ຕ່າງປະເທດເກີນໜຶ່ງປີຊຶ່ງບໍ່ແມ່ນການໄປສຶກສາຫຼືປິ່ນປົວສຸຂະພາບ.

9. ຜູ້ໃຫ້ບໍລິການຊຳລະ ໝາຍເຖິງທະນາຄານທຸລະກິດ, ສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ບໍລິການຊຳລະໂດຍກົງແກ່ຜູ້ໃຊ້ບໍລິການ ຊຶ່ງມີລະບົບການຊຳລະທີ່ເປັນຂອງຕົນ ຫຼື ທີ່ເຊື່ອມຕໍ່ກັບລະບົບການຊຳລະຂອງຜູ້ຄວບຄຸມລະບົບການຊຳລະອື່ນ;

10. ການ ຊື້ ຂາຍ ເງິນຕາຕ່າງປະເທດຮູບແບບທັນທີ (Spot) ໝາຍເຖິງ ການ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງຄູ່ສັນຍາ ເປັນສະກຸນເງິນຕ່າງປະເທດໃດໜຶ່ງກັບສະກຸນເງິນກີບໃນຈຳນວນເງິນ ແລະ ນຳໃຊ້ອັດຕາແລກປ່ຽນໃນເວລາດຳເນີນທຸລະກຳຕົວຈິງ;

11. ສັນຍາ ຊື້ ຂາຍ ຝາກເງິນຕາຕ່າງປະເທດ (Swaps) ໝາຍເຖິງ ສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ເພື່ອແລກປ່ຽນການ ຊື້ ຫຼື ຂາຍ ຝາກເງິນຕາຕ່າງປະເທດສະກຸນໃດໜຶ່ງກັບສະກຸນເງິນກີບໃນອັດຕາແລກປ່ຽນທັນທີຂອງວັນເຮັດສັນຍາ ໂດຍມີສັນຍາວ່າຈະຂາຍ ຫຼື ຈະຊື້ເງິນຕາຕ່າງປະເທດຈຳນວນດັ່ງກ່າວຄືນໃນວັນຄົບກຳນົດສັນຍາຕາມອັດຕາແລກປ່ຽນລ່ວງໜ້າທີ່ໄດ້ກຳນົດໄວ້ໃນສັນຍາ;

12. ສັນຍາ ຊື້ ຂາຍ ເງິນຕາຕ່າງປະເທດແບບລ່ວງໜ້າ (Forwards) ໝາຍເຖິງສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ເພື່ອ ຊື້-ຂາຍ ເງິນຕາຕ່າງປະເທດສະກຸນໃດໜຶ່ງກັບສະກຸນເງິນກີບແບບລ່ວງໜ້າ ໂດຍມີການກຳນົດອັດຕາແລກປ່ຽນລ່ວງໜ້າ, ຈຳນວນເງິນກີບ, ຈຳນວນເງິນຕາຕ່າງປະເທດ, ວັນທີສົ່ງມອບ ແລະ ເງື່ອນໄຂອື່ນທີ່ໄດ້ຕົກລົງກັນໄວ້ລ່ວງໜ້າ. ອັດຕາແລກປ່ຽນລ່ວງໜ້າທີ່ກຳນົດນັ້ນອາດຈະສູງ ຫຼື ຕ່ຳກວ່າອັດຕາແລກປ່ຽນຂອງຕະຫຼາດທີ່ແທ້ຈິງໃນວັນທີ່ສົ່ງມອບ;

13. ສັນຍາສິດໃນການຊື້-ຂາຍ ເງິນຕາຕ່າງປະເທດ (Options) ໝາຍເຖິງສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ໂດຍຝ່າຍຂາຍສິດ ຈະໃຫ້ສິດແກ່ຝ່າຍຊື້ສິດ ໃນການແລກປ່ຽນສະກຸນເງິນກີບກັບສະກຸນເງິນຕາຕ່າງປະເທດໃດໜຶ່ງທີ່ໃຊ້ອ້າງອີງ ຊຶ່ງຈະມີການສົ່ງມອບກັນໃນອະນາຄົດ ຕາມຈຳນວນເງິນ, ໄລຍະເວລາ ແລະ ອັດຕາແລກປ່ຽນ ຫຼື ເອີ້ນວ່າ ອັດຕາໃຊ້ສິດ ທີ່ກຳນົດໄວ້ລ່ວງໜ້າໃນວັນເຮັດສັນຍາ. ຝ່າຍຊື້ສິດ ຈະບໍ່ມີພັນທະຜູກພັນ, ສາມາດເລືອກທີ່ຈະໃຊ້ສິດ ຫຼື ບໍ່ໃຊ້ສິດ ຕາມສັນຍາກໍໄດ້, ສຳລັບຝ່າຍຂາຍສິດ ແມ່ນມີພັນທະຕ້ອງໄດ້ປະຕິບັດຕາມສັນຍາ ຫາກຝ່າຍຊື້ສິດເລືອກຈະໃຊ້ສິດດັ່ງກ່າວ ຊຶ່ງຝ່າຍຂາຍສິດ ບໍ່ມີສິດຍົກເລີກການ ຊື້ ຫຼື ຂາຍ ເງິນຕາຕ່າງປະເທດດັ່ງກ່າວ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ**

ລັດ ຄຸ້ມຄອງເງິນຕາຕ່າງປະເທດດ້ວຍກົດໝາຍ, ການວາງນະໂຍບາຍ ແລະ ລະບຽບການ ເພື່ອດັດສົມການນຳໃຊ້ເງິນຕາຕ່າງປະເທດຂອງສັງຄົມ ໃຫ້ມີການປະຢັດ, ເກີດປະໂຫຍດສູງສຸດ ແລະ ການສະສົມເງິນຕາຕ່າງປະເທດ ໃຫ້ເພີ່ມຂຶ້ນ.

ອ່ານຕໍ່ສະບັບໜ້າ...




# ຊປປ ລາວ

# ໂດຍ: ສໍ ພູທອນ

⁕ 14 ເມສາ ເບີຍເບີກຟ້າ
1955 ເປັນຂີດໝາຍ
ປະຫວັດວິລະກຳສ້າງ
ຊາວໜຸ່ມລາວເກັ່ງກ້າ
ຊາວໜຸ່ມນາມພະລັງ
ເກີດມີມູນເຊື້ອ
ຜົນງານຍິ່ງໃຫຍ່
ຜົນງານລົ້ນມາກມີ

⁕ ຍ້ອນວ່າຄວາມໜຸ່ມແໜ້ນ
ພາຍຸລົມແດງໝູນ
ຂານອາສາສະໝັກສູ້
ປະຫວັດສາດຈາລຶກໄວ້
ແຂງແກ່ນກາຍາ
ບໍ່ກົວເກງຢ້ານ
ສະຫລະຕົນເພື່ອຊາດ
ບໍ່ວ່າງເວັ້ນລ່າລືມ ດອກນາ!

⁕ ນັບຈາກການຕໍ່ສູ້
ຝ້າງຸ່ມຄົນເຂົາລື
ຕາມດ້ວຍນາມອົງແກ້ວ
ນາຍຄູຄຳອິກຜ້ອມ
ເຊັ່ງຊ່າອົງກະສັດ
ທົ່ວໂລກາກ້ອງ
ກົມມະດຳຄຽງຄູ່
ບໍ່ຍອມກົ້ມກາບມານ

⁕ ຮອດຍຸກລາວຕໍ່ຕ້ານ
ຊາວໜຸ່ມສຸມກຳລັງ
ເປັນທະຫານຄົນກ້າ
ປົກປ້ອງດິນແຜ່ນພື້ນ
ຝູງມານພວກຮາວີ
ຊ່ວຍຊູເມືອງບ້ານ
ຂານອາສາເພື່ອຊາດ
ອາສາສູ້ບໍ່ຖອຍ

⁕ ຍຸກໃໝ່ຊາດຮຽກຮ້ອງ
ຮັກສາດິນແດນຜືນ
ເອົາສະຕິປັນຍາສູ້
ຊາດຈະເຮືອງຮຸ່ງໄດ້ ອາໄສຊາວໜຸ່ມນ້ອຍ
ຊາວໜຸ່ມຈອມພະລັງ
ພັດທະນາເມືອງບ້ານ
ແຮງກາຍສຸມໃສ່
ກຳລັງກ້າຊ່ວຍພັກເຮົາ ຊອບແລ້ວ!




# ວິທີເຮັດວຽກ

ຕໍ່ຈາກສະບັບກ່ອນ...

ພາກທີ 3
ພະຍາດເປັນແຕ່ປາກ (ຕໍ່)

ພະນັກງານເຮົາຫຼາຍຄົນ ຍັງຕິດພະຍາດໃຊ້ພາສາຕ່າງປະເທດຢູ່ ຄວາມລາວມີກໍບໍ່ຢາກໃຊ້: ຖືວ່າໃຊ້ພາສາໄທມ່ວນກວ່າ ຫຼື ເປັນກຽດກວ່າເຊັ່ນວ່າ: ຈະວ່າ “ແຊບ” ກໍບໍ່ວ່າ, ພັດໄປວ່າ “ອະຫຼ່ອຍ” ຈະວ່າມ່ວນຊື່ນກໍບໍ່ວ່າ ໄປວ່າ “ໄພເລາະ” ແລະ ອື່ນໆ. ອີກໃນທຳນອງນີ້ ພວກເຮົາບໍ່ຄັດຄ້ານການຢືມຄວາມຕ່າງປະເທດມາເວົ້າແທນຄວາມລາວທີ່ບໍ່ມີ ເພື່ອເຮັດໃຫ້ພາສາລາວຄົບຖ້ວນຕື່ມ. ແຕ່ພວກເຮົາຕ້ອງຕ້ານຢັ້ນການຢືມບໍ່ຖືກແບບ, ຢືມຈົນວ່າປະຖິ້ມຄວາມລາວທີ່ມີຢູ່ແລ້ວນັ້ນໄປໝົດ, ຈົນວ່າປະຊາຊົນລາວຟັງບໍ່ເຂົ້າໃຈ.

ເວົ້າແນວນັ້ນ ບໍ່ແມ່ນວ່າມີແຕ່ຜູ້ຮັບຜິດຊອບການໂຄສະນາ, ຜູ້ຂຽນໜັງສືພິມ ຫຼື ຂຽນປຶ້ມ ແລະ ນັກວັນນະຄະດີເທົ່ານັ້ນ ທີ່ມີໜ້າທີ່ໂຄສະນາປະຊາຊົນ, ພະນັກງານ ແລະ ສະມາຊິກໜົດທຸກຄົນ ທີ່ຕິດຕໍ່ພົວພັນກັບປະຊາຊົນ ກໍແມ່ນເປັນຜູ້ມີໜ້າທີ່ໂຄສະນາຂອງພັກ. ເພາະສະນັ້ນ ຜູ້ໃດກໍຕ້ອງຮຽນປາກເວົ້າ ເປັນຕົ້ນແມ່ນຮຽນປາກເວົ້າໃຫ້ປະຊາຊົນເຂົ້າໃຈ. ມີຫຼາຍຄົນ ກ່ອນຈະເວົ້າ ບໍ່ມີການກະກຽມຄັກແນ່, ເວລາອອກໄປເວົ້າ ກໍເລີຍເວົ້າແນວເກົ່າຂອງຜູ້ອື່ນເວົ້າໄປກ່ອນແລ້ວ ຫຼື ບໍ່ດັ່ງນັ້ນ ກໍເວົ້າກັບໄປກັບມາແຕ່ອັນທີ່ໂຕເອງເວົ້າມາກ່ອນແລ້ວ, ກະວົນກະວາຍຄືໄກ່ຖືກແຮ້ວ, ຈະເຊົາກໍບໍ່ໃຊ້ການ, ຈະເວົ້າຕໍ່ໄປກໍເບື່ອຫູຜູ້ຟັງ.

ງ) ລາຍງານຍົກຍ້ອງ:

ປະການທີໜຶ່ງ

ແມ່ນເຮັດລາຍງານຕົວະ, ຜົນສຳເລັດມີໜ້ອຍ ກໍຍົກຍໍຂຶ້ນວ່າມີຫຼາຍ, ສ່ວນຂໍ້ບົກພ່ອງນັ້ນກໍເອົາເຊື່ອງອຳໄວ້ບໍ່ເວົ້າເຖິງ, ເປັນເຫດໃຫ້ຊັ້ນສູງບໍ່ເຂົ້າໃຈສະພາບການຄັກແນ່, ແລ້ວກໍເລີຍວາງແຜນການບໍ່ຖືກ ຫຼື ບໍ່ດັ່ງນັ້ນ ກໍລາຍງານຊັກຊ້າ ເປັນເຫດໃຫ້ລາຍງານໄປເຖິງຊັ້ນສູງບໍ່ທັນກັບສະພາບການ, ເມື່ອລາຍງານໄປເຖິງຊັ້ນສູງ ສະພາບກາຍກໍຜ່ານການໄປແລ້ວ ຈະແກ້ໄຂແນວໃດກໍບໍ່ທັນ.

ປະການທີ່ສອງ:

ແມ່ນໃບລາຍງານນັ້ນ ເຫັນມີແຕ່ເລົ່າເລື່ອງ ເລື່ອງເປັນຂໍ້ 1, 2, 3, 4, 5 ຫຼື ກ, ຂ, ຄ, ງ, ຕໍ່ໆໄປ, ບໍ່ຍົກບັນຫາມາເວົ້າໃຫ້ຄັກ ບໍ່ຈຳແນກບ່ອນຮ້າຍບ່ອນດີ ແລະ ບໍ່ສະເໜີວິທີແກ້ໄຂບັນຫາ ບໍ່ເວົ້າຄັກວ່າຕົນເຫັນພ້ອມ ຫຼື ຄັດຄ້ານບ່ອນໃດ?.

ອ່ານຕໍ່ສະບັບໜ້າ...




# ກົກທ່ພູ ປາຍທ່ວິ

# ດົ້ນກົບເມກ

ກົກທ່ພູ ປາຍທ່ວິ ອາດຈະມີຄວາມໝາຍຕ່າງກັນກັບຊື່ທ່ຊ້າງ ຮ່າງທ່ແມວ ແລະ ກົກທ່ພູ ມັນຄືຄວາມເປັນຈິງທີ່ຄົນເບິ່ງເຫັນຫຼັກຖານວັດຖຸ ແຕ່ຜົນຂອງພຶດຕິກຳທີ່ເປັນຜົນງານຍິ່ງໃຫຍ່ຂອງຄົນເຖົ້າແກ່ບຳນານບາງຄົນ ອາດຖືກເຍົາວະຊົນເກີດໃໝ່ໃຫຍ່ລຸນເບິ່ງເຫັນຄືວ່ານ້ອຍທ່ວິ ດັ່ງນັ້ນ ການທີ່ຄົນໃນສັງຄົມເບິ່ງເຫັນຄຸນຄ່າບັນພະບຸລຸດ; ຜູ້ເຖົ້າທີ່ສ້າງຜົນງານມາກ່ອນ ຈຶ່ງເປັນສິ່ງຈຳເປັນບໍ່ຄວນເບິ່ງຂ້າມ ແລະ ລະເລີຍໃຫ້ຄວາມສຳຄັນ ຍົກຍ້ອງເຊີດຊູບົດບາດດັ່ງກ່າວ.

ກົກທ່ພູ ຍັງໝາຍເຖິງປະເທດໃດໜຶ່ງທີ່ມີຮີດຄອງປະເພນີວັດທະນະທຳດີງາມ ມີວັນນະຄະດີ ແລະ ສິລະປະວັດຖຸຮຸ່ງເຮືອງ ມີວິລະກຳອາດຫານ, ມີມູນເຊື້ອນ້ຳໃຈຮັກຊາດສູງສົ່ງ ແຕ່ພໍຕົກມາໃນປັດຈຸບັນ ບັນດາຜົນງານ, ບົດບາດເຫຼົ່ານັ້ນ ຖືກປະປ່ອຍ ປະຖິ້ມຂາດຄວາມສຳຄັນ ຍົກຍ້ອງເຊີດຊູເບົາບາງ ຫົດຫາຍສູນເສຍໄປ ຖືກກະແສວັດທະນະທຳ-ຄ່ານິຍົມໃໝ່ຖ້ວມທົ້ນບູຊາແທນ ຍິ່ງເປັນສິ່ງທີ່ໜ້າຄິດ, ຄົນຮຸ່ນໃໝ່ບໍ່ເຂົ້າໃຈອະດີດ, ບໍ່ເຂົ້າໃຈມູນເຊື້ອ ບໍ່ຮູ້ກົກເຄົ້າ ເຫງົ້າທີ່ມາຂອງຕົນ ພາໃຫ້ເກີດຄວາມບໍ່ຮູ້ສິງໄສ, ເບິ່ງບໍ່ເຫັນຄຸນຄ່າໃນພູມປັນຍາຂອງອະດີດ ຈຶ່ງບໍ່ເຊີດຊູສົ່ງເສີມ; ຂາດຄວາມຮັກລ້ຳເລິກໃນມູນມໍລະດົກຊາດ, ບໍ່ສົນໃຈວິເຄາະວິໄຈໃຫ້ເຫັນຄຸນຄ່າ ບາງເທື່ອບາງກໍລະນີຖືກແກ່ດຶງຊັກຈູງ ເຫັນຄຸນຄ່າຄົນອື່ນດີກວ່າພີ່ນ້ອງເຜົ່າພັນ...!

ກົກທ່ພູ ປາຍທ່ວິ ມັນຈຶ່ງສຸດສ້ອຍກາບປີ ເພາະວ່າຄົນຮຸ່ນໃໝ່ເບິ່ງບໍ່ເຫັນຄຸນຄ່າຂອງປະຫວັດສາດ; ຄຸນຄ່າຂອງພູມປັນຍາ ບັນພະບຸລຸດໃນຮີດຄອງປະເພນີວັດທະນະທຳ, ມູນເຊື້ອອົງອາດກ້າຫານ, ບໍ່ຍອມຈຳນົນ ເສຍສະຫຼະຊີບເພື່ອຊາດ... ມູນເຊື້ອທີ່ເວົ້າມານັ້ນ ມັນຈຶ່ງສຸດສ້ອຍ ຖ້າວ່າຄົນຮຸ່ນໃໝ່ບໍ່ຈິງໃຈປົກປັກຮັກສາ, ເຊີດຊູພັດທະນາສືບຕໍ່ຂະຫຍາຍມູນເຊື້ອ. ດັ່ງນັ້ນ, ວິລະກຳ ບັນພະບຸລຸດສ້າງຍິ່ງໃຫຍ່ກວ່າພູຜາ ເຮົາຕ້ອງສຶກສາຮຽນຮູ້ກະຕັນຍູຮູ້ຄຸນ...!

ສັງລວມວ່າ: ກົກທ່ພູ ປາຍທ່ວິ ເປັນຄຳເວົ້າໃຫ້ຄະຕິເຕືອນຈິດໃຈບໍ່ໃຫ້ຄົນຫຼົງລືມໂຕ; ຫຼົງລືມບັນພະບຸລຸດ; ຫຼົງລືມມູນເຊື້ອຊາດຂອງຕົນ; ບໍ່ໃຫ້ຫຼົງເຫີ່ກະແສໃໝ່ຂອງວັດຖຸຈົນລືມຄຸນຄ່າພູມປັນຍາຊາດຂອງຕົນ, ເຮົາຈະຮູ້ຈັກເຊີດຊູໄດ້ ຕ້ອງສຶກສາຄົ້ນຄວ້າບໍ່ເຫັນແກ່ຫຼິ້ນກິນຟຸມເຟືອຍ!

# ນິທານຕົ້ນກຳເນີດປີໃໝ່ລາວ

# ໂດຍ: ນາງ ສີດາ

ບຸນປີໃໝ່ລາວ ຫຼື ບຸນສົງການ ເປັນປະເພນີຂອງລາວທີ່ໄດ້ປະຕິບັດ ແລະ ສືບທອດກັນມາແຕ່ດົນນານ ເຊິ່ງໄດ້ມີປະຫວັດທີ່ເລົ່າຂານກັນເປັນນິທານບູຮານວ່າ: "ພະຍາກະບິນລະພົມຕ້ອງການທົດສອບຄວາມສະຫຼາດຂອງທ້າວທຳມະບານກຸມມານ ໂດຍໄດ້ຕັ້ງຄຳຖາມໄວ້ 3 ຂໍ້ຄື: 1. ຕອນເຊົ້າສີຣິ (ລາສີ) ຂອງຄົນຢູ່ໃສ? 2. ຕອນທ່ຽງສີຣິຂອງຄົນຢູ່ໃສ? ແລະ 3. ຕອນຄ່ຳສີຣິຂອງຄົນຢູ່ໃສ? ໂດຍມີການກຳນົດໃຫ້ຕອບພາຍໃນ 7 ວັນ ແລະ ມີການເດີມພັນດ້ວຍການຕັດຫົວຂອງອີກຝ່າຍໜຶ່ງທີ່ປະລາໄຊ; ນິທານໄດ້ແກ້ຂໍ້ປົດສະໜາດ້ວຍການໃຫ້ທຳມະບານກຸມມານບໍ່ສາມາດຫາຄຳຕອບໄດ້ ຈົນຮອດວັນທີ 6 ຈຶ່ງໄດ້ອອກເດີນທາງຈາກຜາສາດ ແລະ ໄດ້ໄປພັກເຊົາຢູ່ກ້ອງກົກຕານແຫ່ງໜຶ່ງ ໃນເວລານັ້ນເອງ, ມີແຮ້ງຜົວເມຍ ລົມກັນເຖິງບັນຫາ ແລະ ຄຳຕອບດັ່ງກ່າວໃຫ້ກັນຟັງ; ເນື່ອງຈາກ ທຳມະບານກຸມມານເປັນຜູ້ສະຫລາດຮູ້ພາສາສັດ ຈຶ່ງສາມາດເຂົ້າໃຈ ແລະ ຕອບຄຳຖາມໄດ້ຖືກທັງ 3 ຂໍ້ຄື: ຕອນເຊົ້າສີຣິຂອງຄົນຢູ່ໜ້າ ເພາະຕື່ນເຊົ້າມາຄົນຕ້ອງລ້າງໜ້າ, ຕອນທ່ຽງສີຣິຂອງຄົນຢູ່ເອິກ ເພາະເມື່ອອາກາດຮ້ອນ ຄົນຈະເອົານ້ຳມາລູບເອິກ ແລະ ຕອນຄ່ຳສີຣິຂອງຄົນຢູ່ທີ່ຕີນ ເພາະຄົນຈະລ້າງຕີນໃຫ້ສະອາດກ່ອນເຂົ້ານອນ. ເມື່ອທຳມະບານກຸມມານ ສາມາດຕອບຄຳຖາມໄດ້ຖືກຕ້ອງ ຈຶ່ງຕ້ອງປະຕິບັດຕາມສັນຍາ ຄືຕ້ອງຕັດຫົວຂອງພະຍາກະບິນລະພົມ ແຕ່ເມື່ອນັ້ນ ຖ້າຫົວຂອງພະຍາກະບິນລະພົມຕົກລົງດິນ, ດິນຈະເກີດໄຟໄໝ້ໂລກ, ຖ້າຕົກໃສ່ມະຫາສະໝຸດ ນ້ຳຈະບົກ ແຫ້ງແລ້ງ ແລະ ຖ້າກຸ້ມຂຶ້ນເທິງຟ້າ ກໍຈະກາຍເປັນພາຍຸລົມແດງ ພາໃຫ້ເກີດໄພພິບັດຂຶ້ນ ດັ່ງນັ້ນ, ຈຶ່ງສັ່ງໃຫ້ລູກສາວທັງ 7 ຄົນ ເອົາພາຖາດ ມາຮອງເອົາຫົວຂອງພໍ່ ແລະ ໄປໄວ້ທີ່ພູເຂົາໄກລາດ ໂດຍໃຫ້ນາງທັງເຈັດຜັດປ່ຽນໝູນວຽນກັນເອົາອັນອອກມາລ້າງສ່ວຍໃນມື້ຂອບປີ (ເດືອນ 5 ລາວ) ຂອງທຸກໆປີ; ກ່າວເຖິງນາງທັງເຈັດ ແມ່ນມີຄວາມພິເສດຂອງໃຜລາວ ທັງດ້ານອາຫານທີ່ສະເຫວີຍ (ກິນ), ເຄື່ອງປະດັບ, ສັດທີ່ເປັນພາຫະນະ ແລະ ອາວຸດປະຈຳຕົວ. ປີນີ້ ການສະເຫຼີມສະຫລອງບຸນປີໃໝ່ລາວ ພສ. 2566 ແມ່ນຢູ່ໃນໄລຍະວັນທີ 14- 16 ເມສາ 2023 (ຕາມປະຕິທິນສາກົນ) ເຊິ່ງການສະເຫຼີມສະຫຼອງໃນ 3 ວັນ ດັ່ງກ່າວ ມື້ທຳອິດເອີ້ນວ່າ "ວັນສັງຂານລ່ວງ" ເປັນມື້ສິ້ນຂອງປີເກົ່າ, ມື້ທີສອງແມ່ນ "ວັນເນົາ" ເປັນມື້ທີ່ຢູ່ລະຫວ່າງການປ່ຽນຈາກປີເກົ່າຫາປີໃໝ່ ແລະ ມື້ສຸດທ້າຍເປັນມື້ເລີ່ມຕົ້ນຂອງປີໃໝ່ເອີ້ນວ່າ: "ວັນສັງຂານຂຶ້ນ" ແລະໃນປີນີ້ ເປັນຜຽນຂອງທິດາອົງທີ 4 ຂອງພະຍາກະບິນລະພົມ ມີຊື່ວ່າ ນາງ ມົນທາເທວີ ທັດດອກຈຳປາແດງ ພ້ອມດ້ວຍແກ້ວໄພທູນ (ແກ້ວສີຂຽວໃບໄມ້), ສະເຫວີຍນົມເປັນອາຫານ, ມືຂວາຖືຫອກ, ມືຊ້າຍຖືໄມ້ເທົ້າສະເດັດນັ່ງເທິງຫຼັງມະຫິງສາ (ຄວາຍ).



# ຊຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຂຶ້ນ | ຂື້ນ |
| ສຳຜັດມື | ສຳພັດມື |
| ສິ້ນສຸດ | ຊິ້ນສຸດ |
| ຊິນເຄີຍ | ຊິ້ນເຄີຍ |
| ຊິ້ນສ່ວນ | ສິ້ນສ່ວນ |
| ປະນີດ | ປານີດ |
| ປານີ | ປະນີ |
| ອີງຕາມ | ອິງຕາມ |
| ຫຼິ້ນ | ຫຼີ້ນ |




# ມະຫາລວຍ

**ມະຫາລວຍ:** ເປັນຊື່ມົນຄາຖາແບບໜຶ່ງ ທີ່ເຮັດໃຫ້ຄົນຫຼົງຮັກໃນສະໄໝບູຮານ. ເຈົ້າອີກແບບໜຶ່ງແມ່ນ "ມົນສະເໜ່" ຄົນໃນສະໄໝບູຮານນິຍົມໃຊ້ການກ່າວພາລາສີແບບມົນສະເໜ່ ຄືມະຫາລວຍ ເພື່ອໃຫ້ຜູ້ສາວຫຼົງຮັກຕົນເອງດ້ວຍການບັງຄັບແບບມົນສະເໜ່. ມົນສະເໜ່ນີ້ ປາກົດອອກມາ ເປັນວັດຖຸຕົວຈິງຄື ນອດສະເໜ່ ທີ່ບັນຈຸໄວ້ໃນອູບ ຫລື ກັບຊະນິດຕ່າງໆ ເອີ້ນວ່າ "ກັບນອດສະເໜ່", ນອດສະເໜ່ຕ່າງໆນັ້ນ ກ່ອນເພິ່ນຈະເຮັດຂຶ້ນມາໄດ້ກໍຕ້ອງຜ່ານຫລາຍຂັ້ນຕອນເພື່ອໃຫ້ສັກສິດ ໂດຍສະເພາະແມ່ນໃຊ້ມົນຄາຖາ ມະຫາລວຍ ເພື່ອປຸກເສກ. ເມື່ອເອົານອດນັ້ນ ທາໃສ່ສົບຕົນເອງແລ້ວ ເຂົ້າໄປເວົ້າຈາກັບຜູ້ສາວທີ່ຕົນຮັກນັ້ນ ແລ້ວຜູ້ສາວນັ້ນ ກໍຈະເກີດຄວາມຮັກໄດ້ ຢ່າງມະຫັດສະຈັນ.

ສະໄໝບູຮານ ມີນອດສະເໜ່ຫລາຍແບບເຊັ່ນ: ມະຫານິຍົມ, ນອດສະເໜ່ຫາ, ນອດສະເໜ່ກາຕອມເທ່ວ, ນອດສະເໜ່ລີ້ນຫອງ ນອດສະເໜ່ຈັນ ແລະ ອື່ນໆ.

ຊວດສະເໜ່ກາຕອມເທ່ວ, ການເຮັດນອດນີ້ ເພິ່ນໃຊ້ນ້ຳມັນພາຍນັ້ນຄືການໄປປຸກຜີຕາຍທູງຢູ່ປ່າຊ້າໃນຍາມກາງຄືນ ເມື່ອຜີລຸກຂຶ້ນມາ ເພິ່ນກໍໃຊ້ທຽນເພີ້ງໄຕ້ຂຶ້ນ ແລ້ວເອົາໄປລົນໃສ່ຄາງຜີ ໃຫ້ນ້ຳມັນຜີຍ້ອຍອອກ ແລວກໍເອົາກັບນອດໄຕ່ໆເອົາ ..., ສ່ວນຄາຖາລີ້ນຫອງນັ້ນ ກ່ອນຈະເຮັດຂຶ້ນ ເພິ່ນກໍກຽມເອົາແຜ່ນຄຳ ມາກໍ້ເຂົ້າໃຫ້ເປັນຫລອດ ແລ້ວເອົາໄປໃສ່ໃນປາກຂອງຄົນທີ່ຕາຍໃຫ້ໄດ້ຄືນໜຶ່ງ ແລ້ວຈຶ່ງເອົາໄປລົງຄາຖາໃສ່ຈາກນັ້ນ ກໍສູດຫລາຍວັນ ຈຶ່ງຕັດເຮັດເປັນລົບແລ້ວສຸບໃສ່ແຂ້ວ ພວກເຮົາເອີ້ນວ່າ "ແຂ້ວຄຳ" ຍິ້ມໃສ່ສາວໃດ ສາວນັ້ນ ກໍຫຼົງຮັກທັນທີເລດ ...

ພວກຜູ້ເຖົ້າບູຮານ ເຈົ້າຢອກເດັກນ້ອຍພວມສອນບ່າວວ່າ ກ້າພວກສູຢາກຮັກຜູ້ສາວບໍ່ໄດ້ນາກ ຊິບອກມົນສະເໜ່ໃຫ້

"ເຫັດບົດຈັນຂ້າງຂອນແດງ
ຮອດຍາມແລງ ຜູ້ສາວມາລ່ຳ
ຮອດຍາມຄ່ຳ ຜູ້ສາວມາຄອຍ
ຮູ້ສາວບໍ່ມາ ກູໄປເອງ..."



## ສຸກສະບາຍຫາຍໂລດ

ໃນປັດຈຸບັນນີ້ ຢາສະຜົມມີຫລາກຫຼາຍຍີ່ຫໍ້ ແລະ ຫຼາກຫຼາຍສູດ ຈົນເລືອກຊື້ເລືອກໃຊ້ບໍ່ຖືກ ແຕ່ເຊື່ອແນ່ວ່າຫລາຍທ່ານຈະເລືອກໃຊ້ຜະລິດຕະພັນທີ່ມີກິ່ນຫອມຕາມໃຈມັກ ແຕ່ບາງຄັ້ງ ການໃຊ້ຕາມທີ່ໂຕເອງມັກ ອາດຈະພາໃຫ້ເກີດມີອາການຄັນ ຫຼື ແສບໜັງຫົວ ບາງເທື່ອກໍມີສິວຂຶ້ນຕາມໜັງຫົວ... ຖ້າທ່ານມີອາການເຫຼົ່ານີ້ ລອງມາກວດນຳກັນເບິ່ງວ່າທ່ານມີອາການແພ້ຢາສະຜົມຫຼືບໍ່ ແລະ ໃນຄໍລຳສຸກສະບາຍຫາຍໂລດສະບັບນີ້ ເຮົາມີ 5 ສັນຍານເຕືອນ ອາການແພ້ຢາສະຜົມມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ ແລະ ສັງເກດໄປນຳກັນ:

# 5 ສັນຍານເຕືອນອາການແພ້ຢາສະຜົມ

**ແປ ແລະ ຮຽບຮຽງໂດຍ: ສາວແອ່ນ**



### 1. ແສບໜັງຫົວ ແລະ ມີຮອຍແດງ.

ຫາກທ່ານໃດທີ່ໃຊ້ຢາສະຜົມແລ້ວ ຮູ້ສຶກແສບໆຄັນໆໜັງຫົວ ຕັ້ງແຕ່ເທື່ອທຳອິດທີ່ໃຊ້ ໂດຍທີ່ບໍ່ມີບາດແຜໃນໜັງຫົວ ອາການແບບນີ້ ເປັນອາການແພ້ຢາສະຜົມ ເພາະໃນຢາສະຜົມອາດຈະມີສານເຄມີບາງຊະນິດທີ່ເຮັດໃຫ້ໜັງຫົວເກີດອາການຄັນຈົນອັກເສບ ແລະ ຈະກາຍເປັນຮອຍແດງຕາມໜັງຫົວບໍລິເວນອ້ອມຮອບ ແລະ ບາງຄົນອາດຈະມີອາການແສບນຳອີກ.

### 2. ມີຕຸ່ມຂຶ້ນ ແລະ ມີອາການຄັນ

ນອກຈາກບໍລິເວນໜັງຫົວແລ້ວ ບ່ອນໃດຖືກຢາສະຜົມກໍຈະມີຕຸ່ມຂຶ້ນ ຫຼື ຄັນ ເກີດຈາກຢາສະຜົມບາງຊະນິດມີສານ SLS (ສານຫຼຸດຄວາມຕຶງຂອງຜິວ) ແລະ ພາລາເບນ (ສານກັນບູດໃນເຄື່ອງສຳອາງ) ທີ່ໄປທຳລາຍຄວາມຊຸ່ມຊື່ນ ແລະ ເຮັດໃຫ້ເກີດອາການຄັນໃນບ່ອນທີ່ຖືກກັບຢາສະຜົມ.

### 3. ມີສິວສ້ຽນ ແລະ ສິວເກືອ

ຢາສະຜົມທີ່ເຮົາໃຊ້ນັ້ນ ອາດເປັນສາເຫດທີ່ແທ້ຈິງຂອງການມີສິວ ເຊິ່ງມັກຈະເກີດບໍລິເວນໜ້າຜາກ, ຕີນຜົມ ແລະ ໝົດ ໂດຍສະເພາະສິວເກືອ ແລະ ສິວສ້ຽນ ເພາະໃນຢາສະຜົມມີສານຊິລິໂຄນປະສົມຢູ່ ເພື່ອເອືອບຜົມມີຄວາມນຸ່ມ ແລະ ມືນ ພ້ອມນັ້ນ, ສານດັ່ງກ່າວກໍເປັນສາເຫດຫຼັກຂອງການເປັນສິວສ້ຽນ ເຊິ່ງເກີດຂຶ້ນໄດ້ຈາກສານຊິລິໂຄນໃນຢາສະຜົມຕົກຄ້າງ ແລະ ສະສົມຕາມຮູຂຸມຂົນ ຈົນເກີດເປັນອາການແພ້ຢາສະຜົມ ແລະ ເປັນສິວນັ້ນເອງ.

### 4. ມີຂີ້ຫົວ

ເປັນອີກໜຶ່ງສັນຍານທີ່ເຫັນໄດ້ຢ່າງຈະແຈ້ງ ນອກຈາກມີສະເກັດຂາວໆເປັນຝຸຍຕົກລົງມາແລ້ວ ຍັງມີອາການຄັນນຳອີກ ເຊິ່ງອາດເກີດໄດ້ຈາກຫຼາຍສາເຫດ ບາງເທື່ອອາດຈະເປັນເພາະໜັງຫົວແຫ້ງ ແລະ ອັກເສບ ລວມເຖິງເຊື້ອລາຕ່າງໆດັ່ງນັ້ນ, ຈຶ່ງຕ້ອງໝັ່ນສັງເກດເວລາທີ່ປ່ຽນໃຊ້ຢາສະຜົມໃໝ່ ວ່າມີຂີ້ຫົວເກີດຂຶ້ນ ຫຼືບໍ່ ຖ້າມີໃຫ້ຢຸດໃຊ້ໃນທັນທີ.

### 5. ຜົມຫຼົ່ນ

ຢາສະຜົມ ເປັນໜຶ່ງສາເຫດທີ່ເຮັດໃຫ້ຜົມຫຼົ່ນ ອັນເກີດຈາກສານຊິລິໂຄນຕົກຄ້າງຢູ່ໃນກົກຜົມ ເຊິ່ງຈະໄປອັດຕັນ ແລະ ເຮັດໃຫ້ຜົມຫຼົ່ນ; ນອກນັ້ນ, ຜົມຫຼົ່ນຍັງເກີດມາຈາກຫຼາຍສາເຫດເຊັ່ນ ແພ້ອາຫານ, ນອນເດິກ ຫຼື ມີພຶດຕິກຳທີ່ສົ່ງຜົນບໍ່ດີຕໍ່ເສັ້ນຜົມ ເປັນຕົ້ນການສະຜົມກາງຄືນແລ້ວບໍ່ເຮັດໃຫ້ແຫ້ງ ມັດຜົມແໜ້ນຈົນເກີນໄປເປັນປະຈຳ.

## ອາດ ກະວີລາວ

# ປີໃໝ່ໄຊຊະນະໃໝ່

**# ໂດຍ: ກຸຫຼາບເມືອງໃຕ້**

❊ ວັນເວລາເຄື່ອນຍ້າຍ — ເລີຍລ່ວງມາເຖິງ
ເດືອນເມສາສົງການ — ຊື່ນບານເຫຼືອລົ້ນ
ຄົນລາວເໜືອກາງໃຕ້ — ກຽມໃຈລໍປີໃໝ່
ປວງປະຊາໃຫຍ່ນ້ອຍ — ຄອຍຖ້າຮ່ວມງານ

❊ ລັດຖະການກໍພ້ອມ — ຍໍຍື່ນພອນໄຊ
ມີມາໄລດວງຫອມ — ດອກຄູນປະດັບເອ້
ບາສີສູ່ຂ້ວນເອີ້ນ — ມັດແຂນເອົາໂຊກໃຫຍ່
ວັນປີໃໝ່ຮອດມື້ — ຫົດລ້າງຕໍ່ກັນ ນັ້ນນາ!

❊ ວາລະດິຖີປີໃໝ່ນີ້ — ຂໍຈົ່ງສຸຂີ
ໂພຍໄພໜີລາໄກ — ຢ່າມີມາຕ້ອງ
ຄວາມໝິ່ນໝອງເຄີຍເສົ້າ — ຫາຍໄປນຳປີເກົ່າ ພຸ້ນທ້ອນ!
ປີໃໝ່ນຳພອນໄຊສິ່ງຕ້ອນ — ຊຸມເຈົ້າຈົ່ງສະບາຍ

❊ ກາຍ ແລະ ໃຈທ່ານນັ້ນ — ໂລຄາຫ່າງຫາຍໜີ
ມີຄວາມສຸກສົດໃສ — ດັ່ງດຽວໂດຍແກ້ວ
ຫວັງທຸກແນວຂໍໃຫ້ — ປະສົບໄຊໂຊກໃຫຍ່
ສີວິໄລຮຸ່ງກ້າວ — ມີໄຊກ້າແກ່ນແຂງ

❊ ສົມກັບຄວາມມາດແມ້ງ — ຈິດຊື່ນໃຈບານ
ສຸກສຳລານມະໂນໃນ — ຮຸ່ງໃສຈະເລີນກ້າວ
ປີໃໝ່ລາວມາເຖິງນີ້ — ຊີວິດສຸກສົດຊື່ນ
ຂໍໃຫ້ລວຍລາບລົ້ນ — ຕາມໃຈຕັ້ງຕໍ່ປະສົງ

❊ ປີໃໝ່ຈົ່ງພົບພໍ້ — ຜົນສຳເລັດຕາມແຜນ
ສຸຂະພາບແຂງແຮງ — ໂຣກໄພໄກເວັ້ນ
ເປັນຜູ້ມີໄຊກ້າ — ລາສີງາມສະຫງ່າ
ໄຊຊະນະຍາດໄດ້ — ໃນມື້ໃໝ່ແຫ່ງປີ ທ່ານເອີຍ!



## ສັບສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ຊົມ**ເຊີຍວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ທີ່ຈະໄດ້ຕ່າວໝູນວຽນມາບັນຈົບຄົບຮອບ **68 ປີ** (14/4/1955-14/4/2023) ຂໍອາໄສເວທີນີ້ຍື່ນຕ້ອນ ພອນໄຊສົ່ງໄປຫາ ຊາວໜຸ່ມລາວທົ່ວສາຫາ ຢູ່ເໜືອ-ກາງ-ໃຕ້ ຂໍໃຫ້ມີສຸກລົ້ນ ກາຍໃຈໂດຍດັ່ງ ທັງວຽກງານເດັ່ນກ້າວ ຈະເລີນຊົ້ນລົ້ນກວ່າຫຼັງ **ທ່ານເອີຍ!**

❊ **ເບື່ອງ**ໃນໂອກາດ ປີເກົ່າ **(ຊວດ)** ຫຍັບຍ່າງຍ້າຍ **(ເຖາະ)** ກະຕ່າຍປີໃໝ່ວຽນມາ ຊາວ່າບ່າພອນໄຊ ເພັດພອຍມາຕ້ອນ ຫາບຄອນເງິນຄຳແກ້ວ ມາໂຮຍໂຮມຄົບພອມອ່າບ ຈົ່ງສຸຂີລົ້ນບ້ານ ລອຍລົ້ນຕະຫລອດໄປ ສ່ວນຜູ້ໃດຫາກໍມາເປີດພໍ້ ກໍໂດຍດັ່ງດຽວກັນ ຂໍໃຫ້ເງິນຄຳໄຫຼ ຫຼັ່ງມາໂຮມເຕົ້າ ຢ່າໄດ້ຈົບໜອງເສົ້າ ແຟນຄໍລຳເຮົາທຸກທັບແຫ່ງ ຈ່າຍຢ່າບົກຈົກຢ່າແຫ້ງ ເງິນຄຳລົ້ນອົ່ງຄົ່ງ **ທຸກທ່ານເນີ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ຢ່າມາຕົວະ**

ເດັກນ້ອຍສອງຄົນກຳລັງຍ່າງຢູ່ແຄມທາງ ທັນໃດເຂົາກໍພາກັນແຫງນໜ້າຊີ້ນຟ້າ, ຄົນໜຶ່ງເອົ້າຊີ້ນວ່າ:

- ກູຈື່ແລ້ວລະ ນີ້ແມ່ນຍົນປະທານປະເທດ
- ມຶງເປັນບ້າຕີ! ຄັນແມ່ນຍົນປະທານປະເທດ ຄືບໍ່ມີຂະບວນລົດບ່າທາງຊົ້ນບະ, ມຶງຢ່າມາຕົວະກູ.



## ຄະຕິເຕືອນໃຈ

**# ດອກຊະຍອມ**

| | |
|---|---|
| ບໍ່ມີດວງຕາໃດ | ບໍ່ເຄີຍຜ່ານການຮ້ອງໄຫ້ |
| ບໍ່ມີຄວາມສຳເລັດໃດ | ບໍ່ເຄີຍຜ່ານຄວາມຜິດພາດ |




# ພັນທະ- ໜ້າທີ່

'ພັນທະ' ແລະ 'ໜ້າທີ່' ເປັນສອງຄຳທີ່ມີສ່ວນກ່ຽວພັນກັນ ແລະມີຄວາມໝາຍຄືແລະຕ່າງກັນດັ່ງນີ້:

'ພັນທະ' ເປັນຄຳຈາກເຄົ້າປາລີ-ສັນສະກິດ ໝາຍເຖິງ "ການຜູກ, ມັດ, ຣັດ". ເມື່ອນຳໃຊ້ເຂົ້າໃນພາສາລາວ ມັກໃຊ້ເປັນຄຳນາມ ໝາຍເຖິງ "ຂໍ້ຜູກມັດ, ຂໍ້ຜູກພັນ" ເຊັ່ນ

- ດວງເຮັງບໍ່ທັນສ້າງຄອບຄົວ ເພາະບໍ່ຢາກມີພັນທະ.
- ຢູ່ໃນລັດຖະທຳມະນູນແຫ່ງ ສປປລາວ ພົນລະເມືອງລາວມີພັນທະ 3 ປະການ ຄື:

ພັນທະທີ 1: ມີພັນທະເຄົາລົບ ແລະປະຕິບັດລັດຖະທຳມະນູນ, ກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢ່າງເຂັ້ມງວດ.

ພັນທະທີ 2: ມີພັນທະເສຍພາສີ ແລະອາກອນຕາມກົດໝາຍ.

ພັນທະທີ 3: ມີພັນທະປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມກົດໝາຍ.

'ໜ້າທີ່' ເປັນຄຳນາມ ໝາຍເຖິງ "ວຽກສຳລັບສະເພາະບຸກຄົນຫຼືອົງການໃດໜຶ່ງທີ່ຕ້ອງເຮັດ" ເຊັ່ນ

- ໜ້າທີ່ຂອງຄູແມ່ນສອນນັກຮຽນໃຫ້ມີຄວາມຮູ້.
- ໜ້າທີ່ຂອງນັກຮຽນແມ່ນການຮ່ຳຮຽນຄົ້ນຄວ້າ.
- ໜ້າທີ່ຂອງພໍ່ແມ່ແມ່ນລ້ຽງລູກເຕົ້າໃຫ້ໃຫຍ່ສູງຈູງໜ້າ ແລະເປັນຄົນດີຂອງສັງຄົມ.

ບາງເທື່ອ ກໍປາກົດເຫັນຄຳວ່າ 'ພັນທະ' ມາຊ້ອນໃສ່ 'ໜ້າທີ່' ເປັນ 'ພັນທະໜ້າທີ່' ເຊັ່ນ

- ປາກົດການຫຍໍ້ທໍ້ທາງສັງຄົມ ພວມເປັນສິ່ງທ້າທາຍ ແລະສິ່ງຜົນສະທ້ອນທາງລົບຕໍ່ການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນ ບັນຫາຢາເສບຕິດ, ອຸບັດເຫດຕາມຖະໜົນ, ການຫຼິ້ນກິນຟຸມເຟືອຍ ແລະອື່ນໆ ເຊິ່ງຕະຫຼອດໄລຍະຜ່ານມາລັດຖະບານກໍໄດ້ຖືສຳຄັນໃນການເອົາໃຈໃສ່ຕ້ານແລະສະກັດກັ້ນບັນຫາດັ່ງກ່າວສຸດຂີດ ພ້ອມທັງໃຫ້ເປັນພັນທະໜ້າທີ່ຂອງທົ່ວປວງຊົນ.




# ປະທານປະເທດຈີນ ເນັ້ນແນວທາງສັງຄົມນິຍົມຂອງຈີນ

*ທ່ານ ສີຈິ້ນຜິງ ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນ ເນັ້ນໜັກວ່າ: ຕ້ອງເຊື່ອມຊຶມ ແລະ ຜັນຂະຫຍາຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.*


ພາບປະກອບ

ກ່ອນໜ້ານີ້, ກົມການເມືອງສູນກາງພັກຄອມມູນິດຈີນ ໄດ້ຈັດການຮ່ຳຮຽນລວມໝູ່ຄັ້ງທີ 4 ກ່ຽວກັບການເຊື່ອມຊຶມ ແລະ ຜັນຂະຫຍາຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ ໂດຍມີທ່ານ ສີຈິ້ນຜິງ ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນເປັນປະທານ. ທ່ານ ສີຈິ້ນຜິງ ກ່າວເນັ້ນໜັກວ່າ: ການຮ່ຳຮຽນແບບລວມໝູ່ຄັ້ງນີ້ ມີເປົ້າໝາຍເພື່ອເສີມຂະຫຍາຍບົດບາດຕົວແບບ, ຊຸກຍູ້ໃຫ້ທົ່ວພັກລົງເລິກເຊື່ອມຊຶມແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃນການສຶກສາທີ່ມີຫົວຂໍ້ຫຼັກ, ສ້າງພື້ນຖານດ້ານແນວຄິດທິດສະດີໃຫ້ໜັກແໜ້ນ.

ທ່ານ ສີຈິ້ນຜິງ ກ່າວເນັ້ນໜັກຕື່ມວ່າ: ການປະດິດສ້າງທິດສະດີຂອງພັກກ້າວໄປໜ້າກ້າວໜຶ່ງ, ການຮ່ຳຮຽນທິດສະດີກໍຕ້ອງໄປນຳຢ່າງທັນການກ້າວໜຶ່ງ. ແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໄດ້ຜ່ານຂະບວນການພັດທະນາເປັນເວລາ 10 ປີ ຄຽງຄູ່ກັນນັ້ນ, ພວກເຮົາກໍໄດ້ຊຸກຍູ້ສິ່ງເສີມໃຫ້ທົ່ວພັກຮ່ຳຮຽນໄປນຳເປັນເວລາ 10 ປີ ເຊິ່ງໄດ້ຮັບປະສິດທິຜົນທີ່ພົ້ນເດັ່ນ. ແຕ່ໜ້າທີ່ການສ້າງຖັນແຖວທີ່ມີຄວາມໜັກແໜ້ນດ້ານທິດສະດີຍັງເປັນໜ້າທີ່ທີ່ຫຍຸ້ງຍາກລຳບາກ. ການສຶກສາຄັ້ງນີ້ ໄດ້ກຳນົດການເຊື່ອມຊຶມ ແລະ ຜັນຂະຫຍາຍແນວຄິດສັງຄົມນຳຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ເປັນຫົວຂໍ້ຫຼັກ ແມ່ນເພື່ອຊຸກຍູ້ໃຫ້ທົ່ວພັກ ໂດຍສະເພາະແມ່ນພະນັກງານການນຳເຊື່ອມຊຶມແລະຜັນຂະຫຍາຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.

# ນາຍົກຟິນແລນ ກຽມລົງຈາກຕຳແໜ່ງ ຫຼັງເສຍໄຊການເລືອກຕັ້ງທົ່ວໄປ



ທ່ານ ນາງ ຊານນາ ມາຣິນ ນາຍົກລັດຖະມົນຕີຂອງຟິນແລນ ກຽມລົງຈາກຕຳແໜ່ງຜູ້ນຳປະເທດ ຫຼັງເສຍໄຊການເລືອກຕັ້ງໃຫຍ່ໃນວັນທີ 2 ເມສາ 2023 ເຖິງວ່າພັກ Social Democrats (SDP) ຂອງທ່ານ ຈະໄດ້ຮັບບ່ອນນັ່ງເພີ່ມຈາກການເລືອກຕັ້ງຄັ້ງກ່ອນ 3 ບ່ອນນັ່ງ ເປັນ 43 ບ່ອນນັ່ງ ໂດຍມີຄະແນນສຽງ 19,9% ໄດ້ອັນດັບ 3 ໃນການເລືອກຕັ້ງຄັ້ງນີ້.

ຂະນະທີ່ທ່ານ ເພັດເຕີຣີ ອໍໂປ ຜູ້ນຳຂອງພັກ National Coalition ເປັນຜູ້ທີ່ສາມາດໄດ້ຮັບບ່ອນນັ່ງສູງເຖິງ 48 ບ່ອນນັ່ງ ແລະ ໄດ້ຮັບຄະແນນສຽງສະໜັບສະໜູນສູງສຸດ 20,8%, ຮອງລົງມາແມ່ນທ່ານ ນາງ ຣິກກາ ເພີຣາ ຈາກພັກ Finns ໄດ້ອັນດັບ 2 ດ້ວຍຄະແນນສຽງ 20,1%.

ໂດຍທ່ານ ເພັດເຕີຣີ ອໍໂປ ຈະເປັນຜູ້ໄດ້ຮັບສິດໃນການຈັດຕັ້ງລັດຖະບານຟິນແລນຊຸດຕໍ່ໄປເປັນຄົນທຳອິດ ຖ້າສຳເລັດ ທ່ານ ເພັດເຕີຣີ ອໍໂປ ຈະກ້າວຂຶ້ນເປັນນາຍົກລັດຖະມົນຕີຄົນໃໝ່ຂອງຟິນແລນທັນທີ.

ທ່ານ ເພັດເຕີຣີ ອໍໂປ ກ່າວວ່າ: ຂ້າພະເຈົ້າຄິດວ່າ ປະຊາຊົນຊາວຟິນແລນຕ້ອງການການປ່ຽນແປງ ແລະ ຂ້າພະເຈົ້າຈະເລີ່ມເຈລະຈາກັບພັກການເມືອງອື່ນໆ ເພື່ອຈັດຕັ້ງລັດຖະບານປະສົມ. ຂະນະທີ່ທ່ານ ນາງ ຣິກກາ ເພີຣາ ໄດ້ກ່າວສະແດງຄວາມຍິນດີຕໍ່ຜູ້ຊະນະ, ພ້ອມຊີ້ວ່າ: ຜົນການເລືອກຕັ້ງທີ່ພັກ Finns ຂອງທ່ານໄດ້ບ່ອນນັ່ງເພີ່ມສູງເຖິງ 7 ບ່ອນນັ່ງ ຈົນມີບ່ອນນັ່ງທັງໝົດ 46 ບ່ອນນັ່ງໃນປີນີ້ ຖືເປັນຜົນງານທີ່ດີຫຼາຍໃນປະຫວັດສາດຂອງພັກການເມືອງພັກນີ້.

ທ່ານ ນາງ ຊານນາ ມາຣິນ ຂຶ້ນມາດຳລົງຕຳແໜ່ງນາຍົກລັດຖະມົນຕີອາຍຸນ້ອຍທີ່ສຸດຂອງຟິນແລນໃນປີ 2019 ດ້ວຍການຂຶ້ນມາເປັນຜູ້ນຳລັດຖະບານປະສົມທີ່ປະກອບມີ 5 ພັກການເມືອງ ເຊິ່ງມີຜູ້ນຳພັກເປັນຜູ້ຍິງທັງໝົດ ໂດຍທ່ານມີບົດບາດສຳຄັນໃນໄລຍະການແພລະບາດຂອງໂຄວິດ ລວມທັງການຮັບມືຕໍ່ວິກິດສົງຄາມຣັດເຊຍ-ອູແກຣນ ຈົນມີສ່ວນສຳຄັນໃນການຊຸກຍູ້ໃຫ້ຟິນແລນຍື່ນໃບສະໝັກເຂົ້າເປັນສະມາຊິກໃໝ່ຂອງອົງການ NATO ໃນກາງປີ 2022.

# IMF: ຄວາມສ່ຽງດ້ານການເງິນທົ່ວໂລກເພີ່ມຂຶ້ນ




ມີການລາຍງານຂ່າວວ່າ: ໃນວັນທີ 26 ມີນາ, ທ່ານ ນາງ Kristalina Georgieva ຜູ້ອຳນວຍການໃຫຍ່ກອງທຶນເງິນຕາສາກົນ (IMF) ໄດ້ກ່າວຄຳເຫັນໃນເວທີປາໄສຂັ້ນສູງພັດທະນາຈີນ ຢູ່ນະຄອນຫຼວງປັກກິ່ງ ປະເທດຈີນ, ທ່ານກ່າວວ່າ: ແງ່ຫວັງໄລຍະກາງຂອງພື້ນຖານເສດຖະກິດທົ່ວໂລກຍັງຕ່ຳ ແລະ ຄວາມສ່ຽງສຳລັບຄວາມໝັ້ນທ່ຽງດ້ານການເງິນພວມເພີ່ມຂຶ້ນຍ້ອນສະພາບເງິນເຟີ້, ການປະທະກັນ ແລະ ການແບ່ງແຍກດ້ານພູມສາດການເມືອງເພີ່ມຂຶ້ນ.

ຜູ້ອຳນວຍການໃຫຍ່ກອງທຶນເງິນຕາສາກົນ (IMF) ຖືວ່າ ການປະທະກັນລະຫວ່າງຣັດເຊຍ-ຢູແກຣນ ແລະ ການຣັດແໜ້ນນະໂຍບາຍການເງິນໃນປັດຈຸບັນ ພວມກົດໜ່ວງການພັດທະນາຂອງພື້ນຖານເສດຖະກິດທົ່ວໂລກ. ທ່ານ ນາງ Kristalina Georgieva ຄາດຄະເນວ່າ ນັບທັງແງ່ຫວັງຂອງປີ 2024 ດີຂຶ້ນກໍຕາມ, ແຕ່ການເຕີບໂຕເສດຖະກິດໃນປີໜ້າຍັງຢູ່ໃນລະດັບຕ່ຳກວ່າ 3,8%. IMF ພວມຕິດຕາມການຜັນແປຂອງສະພາບການ ແລະ ຕີລາຄາຜົນກະທົບຕໍ່ແງ່ຫວັງເສດຖະກິດ ແລະ ຄວາມສະຖຽນລະພາບດ້ານການເງິນທົ່ວໂລກຢ່າງໃກ້ຊິດ.

ເວທີປາໄສຂັ້ນສູງພັດທະນາຈີນ ໃນປີນີ້ ຈັດຂຶ້ນແຕ່ວັນທີ 25-27 ມີນາ ຢູ່ປັກກິ່ງ ດ້ວຍຫົວຂໍ້ວ່າ "ການຟື້ນຟູເສດຖະກິດ: ກາລະໂອກາດ ແລະ ການຮ່ວມມື".

**ແຫຼ່ງຄັດຈາກ: vovworld.vn**

# ອິນເດຍ ຫຼຸດຜ່ອນການໃຊ້ ສະກຸນເງິນຕ່າງປະເທດ ໃນການຊຳລະການຄ້າສາກົນ



ອີງຕາມການລາຍງານຂ່າວ ເມື່ອວັນທີ 4 ເມສາຜ່ານມາ ໃຫ້ຮູ້ວ່າ: ອິນເດຍ ປະກາດນະໂຍບາຍການຄ້າຕ່າງປະເທດ ປີ 2023 (FTP 2023) ໂດຍເລີ່ມມີຜົນສັກສິດນັບແຕ່ເດືອນເມສາເປັນຕົ້ນໄປ ດ້ວຍການຫຼຸດຜ່ອນນຳໃຊ້ສະກຸນເງິນໂດລາສະຫະລັດ ແລ້ວຫັນມານຳໃຊ້ສະກຸນເງິນຣູປີ (ສະກຸນເງິນຂອງອິນເດຍ) ເປັນຫຼັກ ໃນການຊຳລະການຄ້າສາກົນ ລວມທັງການຄ້າກັບຣັດເຊຍ.

ປັດຈຸບັນ ມາເລເຊຍແມ່ນປະເທດຫຼ້າສຸດທີ່ຕົກລົງໃຫ້ນຳໃຊ້ສະກຸນເງິນ Rupee ສຳລັບການພົວພັນຄ້າຂາຍກັບອິນເດຍ.

ສຳລັບຂໍ້ລິເລີ່ມນຳໃຊ້ສະກຸນເງິນຣູປີ ໃນການພົວພັນການຄ້າຂາຍກັບມາເລເຊຍ ແມ່ນແນໃສ່ສ້າງເງື່ອນໄຂສະດວກແກ່ການພັດທະນາການຄ້າ ແລະ ໜູນຊ່ວຍຜົນປະໂຫຍດຂອງປະຊາຄົມການຄ້າທົ່ວໂລກ.

ເບິ່ງໄວ້ ໄດ້ບົດຮຽນ

• ວິເສດ ສະແຫວງສຶກສາ

# ມາດຕະການ ແລະ ນະໂຍບາຍ ໃນຂະແໜງແຮງງານຢູ່ບາງປະເທດ

ເລື່ອງ "ເບິ່ງໄວ້ໄດ້ບົດຮຽນ" ປະຈຳ "ຜູ້ແທນປະຊາຊົນ" ສະບັບນີ້ ໄດ້ຈັດສັນກັ່ນຕອງມາຈາກ ສ.ເກົາຫຼີ, ຫວຽດນາມ ແລະ ຍີ່ປຸ່ນ ທີ່ສ່ອງແສງໃຫ້ເຫັນມູນຕ່າງໆຂອງນະໂຍບາຍ ກໍຄືມາດຕະການຄຸ້ມຄອງແຮງງານ. ສຳລັບຢູ່ ສ.ເກົາຫຼີນັ້ນແມ່ນເລື່ອງກ່ຽວກັບມາດຕະການແກ້ໄຂບັນຫາໄດ້ປະກາດໃຊ້ກົດໝາຍແຮງງານສະບັບໃໝ່ນັບແຕ່ວັນທີ 19 ທັນວາ 2019 ເປັນຕົ້ນມາ. ກົດໝາຍໄດ້ກຳນົດຫຼາຍວິທີການອັນຈຳເປັນເພື່ອແກ້ໄຂບັນຫາແຮງງານຜິດກົດໝາຍດ້ວຍຮູບການບັງຄັບ ແລະ ດ້ວຍນະໂຍບາຍຜ່ອນຜັນລະມຸນລະໄມໄປພ້ອມໆກັນ ຕົວຢ່າງ: ກົດໝາຍໄດ້ກຳນົດໃຫ້ແຮງງານຕ່າງປະເທດທີ່ລັກລອບເຂົ້າໄປອອກແຮງງານຢູ່ ສ.ເກົາຫຼີ ຮີບຮ້ອນລາຍງານຕົວຕໍ່ທາງການເພື່ອກັບຄືນປະເທດຕົ້ນທາງຂອງຕົນ ໂດຍຈະບໍ່ຖືກປັບໃໝແຕ່ປະການໃດເລີຍ. ນອກຈາກນັ້ນ; ເມື່ອກັບຄືນປະເທດຂອງຕົນ ໃນໄລຍະໃດໜຶ່ງແລ້ວ, ພວກກ່ຽວຍັງສາມາດເຂົ້າໄປ ສ.ເກົາຫຼີ ໄດ້ອີກ ເພື່ອອອກແຮງງານຢ່າງຖືກຕ້ອງຕາມກົດໝາຍ. ສ່ວນກົດໝາຍແຮງງານສະບັບເກົ່ານັ້ນ ໄດ້ກຳນົດມາດຕະການອ່າວເຄັ່ງຄັດຕໍ່ແຮງງານຜິດກົດໝາຍຄືຜູ້ມີຄວາມຜິດຕ້ອງຖືກກັກຕົວ ແລະ ຖືກປັບໃໝຕາມເວລາທີ່ຢູ່ອອກແຮງງານເກີນກຳນົດ. ຕົວຢ່າງ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຮັດວຽກໃນໄລຍະ 3 ປີ ແຕ່ລັກຢູ່ຕໍ່ອີກ 1 ປີ ເປັນ 4 ປີ, ການປັບໃໝກໍຈະກຳນົດຕາມອັດຕາຄວາມຜິດ 1 ປີ ທີ່ຢູ່ເກີນກຳນົດ, ແຕ່ສຳລັບຜູ້ຢູ່ເກີນກຳນົດເຖິງ 3 ປີ ຂຶ້ນໄປນັ້ນຈະຖືກປັບໃໝເປັນເງິນຈຳນວນ 20 ລ້ານວອນ ຫຼື ປະມານ 140 ລ້ານກີບ (ຕາມອັດຕາແລກປ່ຽນໃນເວລານັ້ນ) ແລະ ສຳຄັນກໍຄືຜູ້ທີ່ມີຄວາມຜິດໃນລະດັບນີ້ນັ້ນ ຈະບໍ່ສາມາດກັບຄືນໄປເຮັດວຽກຢູ່ ສ.ເກົາຫຼີ ໄດ້ອີກ. ກົດໝາຍແຮງງານສະບັບໃໝ່ນີ້ຍັງກຳນົດນະໂຍບາຍຜ່ອນຜັນສຳລັບບັນດານາຍຈ້າງຄືຖ້າພວກເຂົາຈິງໃຈ ແລະ ສະໝັກໃຈລາຍງານໃຫ້ທາງການຊາບກ່ຽວກັບແຮງງານທີ່ຜິດກົດໝາຍ ກໍຈະບໍ່ຖືກປັບໃໝໃສ່ໂທດແຕ່ປະການໃດເລີຍ. ສະຫຼຸບຄວາມແລ້ວກົດໝາຍມີເປົ້າໝາຍຈຳກັດແຮງງານທີ່ເຂົ້າປະເທດແບບຜິດໝາຍນັ້ນເອງ.

ຢູ່ຫວຽດນາມ ກໍມີລາຍງານວ່າ ທາງການໄດ້ເລີ່ມປັບປຸງກົດໝາຍແຮງງານໃນທ້າຍປີ 2019 ແລ້ວປະກາດໃຊ້ໃນວັນທີ 1 ມັງກອນ 2021 ເປັນຕົ້ນມາ. ຈຸດປ່ຽນແປງທີ່ໜ້າສົນໃຈຂອງກົດໝາຍ ກໍຄືໄດ້ເພີ່ມວັນພັກຕື່ມອີກ 1 ວັນ ອັນໄດ້ເຮັດໃຫ້ຈຳນວນວັນພັກປະຈຳປີທັງໝົດໃນຫວຽດນາມ ເພີ່ມຂຶ້ນຈາກ 10 ວັນໃນເມື່ອກ່ອນເປັນ 11 ວັນຕໍ່ປີ. ນອກຈາກນັ້ນ, ກົດໝາຍຍັງໄດ້ກຳນົດຄືນໃໝ່ອາຍຸເຂົ້າບຳນານຄືສຳລັບຜູ້ຊາຍແມ່ນໄດ້ປັບຂຶ້ນຈາກ 60 ປີ ໃນເມື່ອກ່ອນມາເປັນ 62 ປີ, ສ່ວນສຳລັບແມ່ຍິງແມ່ນຈາກ 55 ປີມາເປັນ 60 ປີ. ການປັບຂຶ້ນເກນອາຍຸບຳນານນີ້ ພວມເປັນກະແສມາແຮງໃນຫຼາຍໆປະເທດ ແຕ່ກໍມີຫຼາຍກໍລະນີທີ່ໄດ້ປະເຊີນກັບກະແສຕ້ານຄືນຈາກປະຊາຊົນເຊັ່ນໃນປະເທດຝຣັ່ງ. ການປັບຂຶ້ນເກນອາຍຸບຳນານຢູ່ ສສ.ຫວຽດນາມນັ້ນດຳເນີນໄປເປັນຂັ້ນຕອນແບບຄ່ອຍເປັນຄ່ອຍໄປ. ຕົວຢ່າງ ຂັ້ນຕອນການປັບຂຶ້ນເກນອາຍຸບຳນານຂອງຜູ້ຊາຍ ຈາກ 60 ປີ ເປັນ 62 ປີນັ້ນ, ແມ່ນເລີ່ມຈາກ 60 ປີກັບ 3 ເດືອນກ່ອນແລ້ວຄ່ອຍໆ. ເພີ່ມຂຶ້ນເທື່ອລະກ້າວໃນງວດຕໍ່ໆໄປ. ສ່ວນງວດທີ່ 1 ສຳລັບເພດຍິງນັ້ນແມ່ນ 55 ປີກັບ 4 ເດືອນ. ການດຳເນີນຕາມຂັ້ນຕອນແບບນີ້ຈະບໍ່ເຮັດໃຫ້ມີບັນຫາກະທົບກະເທືອນຕໍ່ຜູ້ເຂົ້າບຳນານແຕ່ປະການໃດເລີຍ. ສຳລັບຢູ່ປະເທດຍີ່ປຸ່ນນັ້ນ, ຂ່າວໜັງສືພິມວຽງຈັນທາມ ສະບັບວັນທີ 10 ກໍລະກົດ 2019 ໄດ້ໃຫ້ຮູ້ວ່າ ກະຊວງແຮງງານຂອງປະເທດນີ້ໄດ້ເລີ່ມແຜນປະຕິບັດນະໂຍບາຍສະໜັບສະໜູນ ແລະ ຊຸກຍູ້ໃຫ້ບັນດາບໍລິສັດຕ່າງໆຊ່ວຍຮັບເອົາຄົນທີ່ບໍ່ມີສຸຂະພາບສົມບູນ ແລະ ຄົນພິການເຂົ້າເຮັດວຽກຢູ່ບໍລິສັດຂອງຕົນ. ນະໂຍບາຍດັ່ງກ່າວຂອງກະຊວງແຮງງານຍີ່ປຸ່ນນັ້ນແມ່ນຜົນຮັບຈາກບັ້ນສຳຫຼວດໃນເດືອນກຸມພາ 2019 ທີ່ຊີ້ອອກວ່າ ຄົນທີ່ມີສຸຂະພາບບໍ່ສົມບູນ ແລະ ຄົນພິການຈຳນວນ 664 ຄົນ ທີ່ນອນຢູ່ໃນບັນຊີຜູ້ອອກແຮງງານນັ້ນ ໃນຕົວຈິງມີເຖິງ 268 ຄົນ ບໍ່ໄດ້ອອກແຮງງານ ແລະ ອີກ 68 ຄົນພວມຢູ່ໃນໄລຍະພັກວຽກ. ຂ່າວບອກວ່າ ຜູ້ທີ່ຖືກສຳພາດນັ້ນ ມີອາຍຸລະຫວ່າງ 20-64 ປີ. ຄຳຕອບສຳພາດຈາກຈຳນວນຄົນສຸຂະພາບບໍ່ສົມບູນ ແລະ ຄົນພິການທີ່ຖືກສຳພາດນັ້ນ ແບ່ງອອກເປັນ 3 ປະເພດຄື: 84,5% ຕອບວ່າ ຕ້ອງການອອກແຮງງານ ຫຼື ສືບຕໍ່ອອກແຮງງານຕື່ມ (ອັນນີ້ແມ່ນຄຳຖາມສຳລັບພວກທີ່ພວມອອກແຮງງານຢ່າງສ່ວນຄຳຖາມສຳລັບຜູ້ທີ່ບໍ່ໄດ້ອອກແຮງງານນັ້ນຊີ້ອອກວ່າ 64,2% ຕ້ອງການຢາກມີວຽກເຮັດ. ສ່ວນຄຳຖາມກ່ຽວກັບສາເຫດທີ່ຄົນສຸຂະພາບບໍ່ສົມບູນ ແລະ ຄົນພິການທີ່ບໍ່ສາມາດອອກແຮງງານ ຫຼື ບໍ່ຕ້ອງການສືບຕໍ່ອອກແຮງງານນັ້ນຄຳຕອບມີດັ່ງນີ້: 50,6% ອ້າງເຫດຜົນວ່າຍ້ອນຮ່າງກາຍອ່ອນເພຍ, 36,9% ບອກວ່າຍ້ອນຄວາມບໍ່ເໝາະສົມຂອງເວລາສຳລັບອອກແຮງງານ ແລະ ອີກ 30,3% ບອກວ່າ ຍ້ອນຄວາມບໍ່ເຂົ້າໃຈ, ບໍ່ໃຫ້ການສະໜັບສະໜູນຈາກເພື່ອນຮ່ວມງານທີ່ມີສຸຂະພາບສົມບູນ ແລະ ຜູ້ທີ່ເປັນຫົວໜ້າ.



## ຊາຍກຳພັງສື

*#ບ່າວກະບື*

*ຄັ້ງໜຶ່ງ ຍັງມີຊາຍໜຸ່ມຄົນໜຶ່ງເຮັດໜ້າທີ່ເປັນຄົນຕີກະແລ່ງປະຈຳໂຮງຮຽນ. ນີ້ຄືວິຊາຫາກິນອັນດຽວສຳລັບລ້ຽງຊີບເຂົາ ທັງນີ້ກໍເພາະວ່າເຂົາກຳພັງສືຂະໜາດຊື່ຕົນເອງກໍຍັງບໍ່ຮູ້ເຊັນ. ຕໍ່ມາມີຈົດໝາຍວຽນສະບັບໜຶ່ງຈາກຄະນະອຳນວຍການໂຮງຮຽນເຖິງທຸກໆຄົນ ທີ່ອ່ານບໍ່ໄດ້ຂຽນບໍ່ເປັນອອກຈາກການ. ຍ້ອນແນວນີ້, ຊາຍໜຸ່ມຜູ້ອາພັບຄົນນັ້ນເລີຍໝົດອາຊີບຕີກະແລ່ງ. ເຂົາເປີດຮ້ານຂາຍເຂົ້າປຽກເສັ້ນຢູ່ໃກ້ໆໂຮງຮຽນແຫ່ງນັ້ນເອງ. ກິດຈະການຂອງເຂົາເບັ່ງບານຂຶ້ນ, ເຂົາເປີດຮ້ານເຂົ້າປຽກທົ່ວເມືອງ. ເຂົາກາຍເປັນຄົນຮັ່ງມີດີໄດ້ຂຶ້ນມາ. ຢູ່ມາມື້ໜຶ່ງ, ຫົວໜ້າໂຮງຮຽນມາຂໍແຮ່ການບໍລິຈາກນຳເຂົາ ເພື່ອສ້ອມແປງໂຮງຮຽນ. ເຂົາເຮັດໃຈກວ້າງ, ບໍລິຈາກສິບລ້ານກີບ. ຫົວໜ້າໂຮງຮຽນເຮັດໃບຢັ້ງຢືນການບໍລິຈາກໃນຈຳນວນສິບລ້ານກີບ ແລ້ວຂໍຮ້ອງໃຫ້ຊາຍໜຸ່ມເຊັນ. ເຂົາຕອບອອກມາວ່າ "ຖ້າຂ້ານ້ອຍຫາກຮູ້ເຊັນຊື່ຕົນເອງແລ້ວ, ກໍ່... ປານນີ້ ຂ້ານ້ອຍກໍຄົງຈະຍັງເຮັດອາຊີບຕີກະແລ່ງປະຈຳໂຮງຮຽນຢູ່ຄືເກົ່າຫັ້ນລະ"*

## UNLETTERED MAN

*# BAOKBU*

There was once a young man who rang the bell in a school. That was his only means of livelihood as he was totally unlettered and could not even sign his name. Came a circular from the school authorities ordering the dismissal of all people employed in school who couldn't read and write. So the poor fellow lost his job as a bell-ringer. He opened a small stall to sell rice noodle soup near the school. It prospered. He opened a second, a third, and a fourth till he had a chain of noodle soup stalls across the city. He became a rich man. One day the school Headmaster came to ask for donation to the school. He generously repair donated ten million kips. The Headmaster put a subscription voucher with the figure of ten million kips and asked him to sign it. He replied, "If I could have signed my name, I would still have been ringing the school bell"

ກາຕູນ




ຄວັນພິດທຳລາຍຊີວິດ ແລະ ສິ່ງແວດລ້ອມ

• ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ຂັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ນາງ ນິດຕາ ຄຸນປາກດີ